**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ** ເລກທີ 0436./ສວນ

ນະຄອນຫຼວງວຽງຈັນ, ວັນທີ 05 ມີນາ 2024

## ໜັງສືແຈ້ງເຊີນ

**ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

**ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023**

- **ອີງຕາມ:** ກົດລະບຽບ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສະບັບລົງວັນທີ 9 ຕຸລາ 2015; ແລະ
- **ອີງຕາມ:** ມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 1/2024 ວັນທີ 13 ກຸມພາ 2024.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ("**ບໍລິສັດ**") ຂໍເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ໃນວັນທີ **08 ເມສາ 2024** ເວລາ 14:00 ໂມງ (ເລີ່ມລົງທະບຽນ ເວລາ 13:00 ໂມງ) ຢູ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມ ທີ່ຄັດຕິດມາພ້ອມນີ້;

ນອກຈາກນີ້ ບໍລິສັດຍັງໄດ້ແຈ້ງວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ແລະ ເອກະສານຄັດຕິດເພື່ອໃຊ້ໃນການພິຈາລະນາ ແລະ ລົງຄະແນນສຽງທັງໝົດນັ້ນ ໄດ້ຖືກເຜີຍແຜ່ ໂດຍບໍລິສັດ ຜ່ານເວັບໄຊ ຂອງບໍລິສັດ **(www.souvanny.la)** ແລະ ລະບົບຂໍ້ມູນຂ່າວສານ ຂອງຕະຫຼາດຫຼັກຊັບລາວ **(www.lsx.com.la)** ລວມທັງໄດ້ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດໃນການເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ໃນວັນທີ **27 ມີນາ 2024** ເຊິ່ງໄດ້ເປີດເຜີຍຂໍ້ມູນໃຫ້ບັນດາທ່ານຊາບແລ້ວ;

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ;

ຂໍສະແດງຄວາມນັບຖື

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

**ທ່ານ ສົມຈິດ ອິນທະມິດ**

ປະທານສະພາບໍລິຫານ

# ໜັງສືເຊີນປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023

**ວັນຈັນ, ທີ 08 ເມສາ 2024**

**ເວລາ 14:00 ໂມງ**

ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8
ອາຄານຕະຫຼາດຫຼັກຊັບລາວ,
ບ້ານໂພນທັນເໜືອ, ເມືອງໄຊເສດຖາ,
ນະຄອນຫຼວງວຽງຈັນ, ສປປ ລາວ.

# ເອກະສານປະກອບໜັງສືເຊີນປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023

1. ໜັງສືເຊີນປະຊຸມຜູ້ຖືຮຸ້ນ;
2. ໜັງສືມອບສິດ;
3. ລາຍຊື່, ຄວາມໝາຍ ແລະ ປະຫວັດ ຂອງສະມາຊິກອິດສະຫຼະ ເພື່ອການມອບສິດ ຂອງຜູ້ຖືຮຸ້ນ;
4. ເອກະສານ ແລະ ຫຼັກຖານ ທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ;
5. ເອກະສານປະກອບວາລະທີ 01: ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022;
6. ເອກະສານປະກອບວາລະທີ 02: ບົດລາຍງານການເງິນ ຂອງບໍລິສັດ ປະຈຳປີ 2023;
7. ເອກະສານປະກອບວາລະທີ 03: ແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2024;
8. ເອກະສານປະກອບວາລະທີ 06: ຊີວະປະຫວັດຫຍໍ້ ຂອງສະມາຊິກສະພາບໍລິຫານ;
9. ເອກະສານປະກອບວາລະທີ 08: ຮ່າງປັບປຸງກົດລະບຽບຂອງບໍລິສັດ;
10. ແຜນທີ່ສະຖານທີ່ຈັດປະຊຸມ.

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ** ເລກທີ 0437/ສວນ

ນະຄອນຫຼວງວຽງຈັນ, ວັນທີ 05 ມີນາ 2024

**ເຖິງ:** ຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

**ເລື່ອງ:** ຂໍເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023

ຂໍເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ໃນວັນທີ 08 ເມສາ 2024, ເວລາ 14:00 ໂມງ (ເລີ່ມລົງທະບຽນ ເວລາ 13:00 ໂມງ) ຢູ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ໂດຍມີວາລະກອງປະຊຸມດັ່ງຕໍ່ໄປນີ້:

1. **ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 (ເອກະສານປະກອບວາລະທີ 1).**

   **ວັດຖຸປະສົງ ແລະ ເຫດຜົນ:** ເພື່ອໃຫ້ຜູ້ຖືຮຸ້ນໄດ້ພິຈາລະນາຮັບຮອງບົດບັນທຶກກອງປະຊຸມ ວ່າຖືກຕ້ອງກົງກັບເນື້ອໃນຈິດໃຈ ຂອງກອງປະຊຸມ ໂດຍບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ມີລາຍລະອຽດຕາມເອກະສານປະກອບວາລະທີ 01.

   **ຄຳເຫັນຂອງສະພາບໍລິຫານ:** ເຫັນວ່າກອງປະຊຸມຜູ້ຖືຮຸ້ນ ຄວນຮັບຮອງເອົາບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ເຊິ່ງຖືກຕ້ອງກົງກັບ ເນື້ອໃນຈິດໃຈ ຂອງກອງປະຊຸມ.

   **ຄະແນນສຽງທີ່ຕ້ອງໃຊ້:** ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ.

2. **ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2023 ແລະ ບົດລາຍງານການເງິນ ຂອງບໍລິສັດ ປະຈຳປີ 2023 (ເອກະສານປະກອບວາລະທີ 2).**

   **ວັດຖຸປະສົງ ແລະ ເຫດຜົນ:** ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 152 ກຳນົດໃຫ້ "**ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ ໃນການຮັບຮອງເອົາບົດສະຫຼຸບ ກ່ຽວກັບການດຳເນີນທຸລະກິດ ແລະ ບົດລາຍງານການເງິນປະຈຳປີ ຂອງບໍລິສັດ**" ໂດຍລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2023 ມີລາຍລະອຽດຕາມເອກະສານປະກອບວາລະທີ 02.

   **ຄຳເຫັນຂອງສະພາບໍລິຫານ:** ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2023 ແລະ ບົດລາຍງານການເງິນ ຂອງບໍລິສັດ ປະຈຳປີ 2023 ເຊິ່ງໄດ້ຜ່ານການພິຈາລະນາ ຂອງສະພາບໍລິຫານ ແລະ ຜ່ານການກວດສອບ ຈາກຜູ້ກວດສອບບັນຊີແລ້ວ.

   **ຄະແນນສຽງທີ່ຕ້ອງໃຊ້:** ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ.

**3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2024 (ເອກະສານປະກອບວາລະທີ 03).**

<u>ວັດຖຸປະສົງ ແລະ ເຫດຜົນ</u>: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 152 ກຳນົດໃຫ້ "ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2024" ໂດຍແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2024 ມີລາຍລະອຽດຕາມເອກະສານປະກອບວາລະທີ 03.

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນວ່າ ກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງ ເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ເຊິ່ງໄດ້ຜ່ານການພິຈາລະນາ ຂອງຄະນະອຳນວຍການ ແລະ ສະພາບໍລິຫານແລ້ວ.

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ.

**4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2023.**

<u>ວັດຖຸປະສົງ ແລະ ເຫດຜົນ</u>: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 153 ກຳນົດໃຫ້ **"ການແບ່ງເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີ ຈາກກອງປະຊຸມຜູ້ຖືຮຸ້ນກ່ອນ"** ແລະ ກົດລະບຽບ ຂອງບໍລິສັດ ສະບັບລົງວັນທີ 9 ຕຸລາ 2015 ມາດຕາ 16 ກຳນົດໃຫ້ **"ນອກຈາກຄັງສຳຮອງຕາມລະບຽບການ ທີ່ໄດ້ກຳນົດໄວ້ໃນມາດຕາ 156 ຂອງກົດໝາຍ ວ່າດ້ວຍວິສາຫະກິດ, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຕົກລົງ ກ່ຽວກັບ ການສ້າງຄັງສຳຮອງອື່ນຄື: ຄັງສະສົມ 10%"**.

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນວ່າໃນປີ 2023 ທີ່ຜ່ານມາ ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດຈຳນວນ **60.799.235.983** ກີບ ເມື່ອຫັກຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງສະສົມ ລວມທັງໝົດຈຳນວນ **20** ສ່ວນຮ້ອຍ ຂອງກຳໄລສຸດທິແລ້ວ ເຫຼືອຈຳນວນ **48.639.388.786** ກີບ ຈຶ່ງເຫັນວ່າ ກອງປະຊຸມຜູ້ຖືຮຸ້ນຄວນອະນຸມັດໃຫ້ມີການຈ່າຍເງິນປັນຜົນໃນອັດຕາ **120** ກີບຕໍ່ຮຸ້ນ, ຈຳນວນເງິນປັນຜົນທັງໝົດ **19.800.000.000** ກີບ ແລະ ກຳນົດຈ່າຍເງິນປັນຜົນແມ່ນ ວັນທີ **06** ພຶດສະພາ **2024**

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ.

**5. ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີ ຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2024.**

<u>ວັດຖຸປະສົງ ແລະ ເຫດຜົນ</u>: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 152 ກຳນົດໃຫ້ "ສິດ ແລະ ໜ້າທີ່ ຂອງກອງປະຊຸມຜູ້ຖືຮຸ້ນແມ່ນ ການເລືອກຕັ້ງຜູ້ກວດສອບບັນຊີ ແລະ ຕົກລົງຄ່າບໍລິການກວດສອບບັນຊີ"

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນວ່າ ກອງປະຊຸມຜູ້ຖືຮຸ້ນຄວນແຕ່ງຕັ້ງ **ບໍລິສັດ ເອິນ ແອນ ຢັງ (ລາວ) ຈຳກັດ (Ernst & Young Lao Co., Ltd)** ເປັນຜູ້ກວດສອບບັນຊີພາຍນອກ ຂອງບໍລິສັດ ປະຈຳປີ **2024** ໂດຍມີຄ່າບໍລິການເປັນເງິນຈຳນວນ ບໍ່ກາຍ **560.740.000 ກີບ (27.000 USD)** ເນື່ອງຈາກ,

**ບໍລິສັດ ເອີນ ແອນ ຢັງ (ລາວ) ຈໍາກັດ (Ernst & Young Lao Co., Ltd)** ມີປະສົບການ, ມີຄວາມລະອຽດຮອບຄອບ, ມີຄວາມຊື່ສັດສຸດຈະລິດໃນໜ້າທີ່ ແລະ ເປັນບໍລິສັດກວດສອບບັນຊີ ທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ ໃນສ່ວນຂອງຄ່າບໍລິການນັ້ນ ກໍ່ເປັນຈໍານວນ ທີ່ເໝາະສົມກັບວຽກງານໃນການກວດກາບັນຊີ ຂອງບໍລິສັດ ເຊິ່ງມີຈໍານວນຫຼວງຫຼາຍ ແລະ ເພື່ອໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ ແລະ ກວດສອບໄດ້ ຈຶ່ງມີຄວາມຈໍາເປັນຕ້ອງນໍາໃຊ້ບຸກຄະລາກອນ ທີ່ມີຄວາມຊ່ຽວຊານ ໂດຍບາງທ່ານກໍ່ເປັນຜູ້ກວດສອບຈາກຕ່າງປະເທດນໍາ.

**ຄະແນນສຽງທີ່ຕ້ອງໃຊ້:** ກົດໝາຍວິສາຫະກິດໄດ້ກໍານົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສຽງ ທີ່ເຂົ້າຮ່ວມກອງປະຊຸມ.

**6. ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານຜູ້ເກົ່າ ທີ່ລາອອກໄປ.**

**ວັດຖຸປະສົງ ແລະ ເຫດຜົນ:** ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 121 ກໍານົດໃຫ້ **“ສະມາຊິກສະພາບໍລິຫານ ຂອງບໍລິສັດ ຖືກເລືອກຕັ້ງຕາມກໍລະນີດັ່ງນີ້ (3) ຕາແໜ່ງສະມາຊິກສະພາບໍລິຫານ ທີ່ວ່າງລົງ ໃນລະຫວ່າງສອງກອງປະຊຸມສາມັນຜູ້ຖືຮຸ້ນແມ່ນແຕ່ງຕັ້ງໂດຍກອງປະຊຸມຂອງສະພາບໍລິຫານ”** ເຊິ່ງໃນວັນທີ 16 ສິງຫາ 2023 ມີ ສະມາຊິກສະພາບໍລິຫານ ຂອງບໍລິສັດຈໍານວນ **1** ທ່ານ ໄດ້ແກ່ **ທ່ານ ບຸນເຕີມ ກົມມະດິດຕະພາບ** ໄດ້ລາອອກຈາກການເປັນ ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

**ຄໍາເຫັນຂອງສະພາບໍລິຫານ:** ໃນກອງປະຊຸມສະພາບໍລິຫານ ຂອງບໍລິສັດ ຄັ້ງທີ 3/2023 ເຊິ່ງຈັດຂຶ້ນໃນວັນທີ 16 ສິງຫາ 2023 ກອງປະຊຸມມີມະຕິແຕ່ງຕັ້ງ **ທ່ານ ສອນສະຫວັນ ແສງອະໄພ** ເປັນສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແທນ ສະມາຊິກສະພາບໍລິຫານຄົນເກົ່າ ທີ່ລາອອກໄປ ໂດຍມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອ ຂອງຄົນເກົ່າ ທີ່ລາອອກໄປແລ້ວນັ້ນ ຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງ ການແຕ່ງຕັ້ງສະມາຊິກສະພາບໍລິຫານ ລາຍລະອຽດປະຫວັດໂດຍຫຍໍ້ປະກົດຕາມເອກະສານປະກອບວາລະທີ 6

**ຄະແນນສຽງທີ່ຕ້ອງໃຊ້:** ກົດໝາຍວິສາຫະກິດໄດ້ກໍານົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສຽງ ທີ່ເຂົ້າຮ່ວມກອງປະຊຸມ.

**7. ພິຈາລະນາ ແລະ ອະນຸມັດປັບເງິນອຸດໜູນເຂົ້າຮ່ວມກອງປະຊຸມ ຂອງສະມາຊິກສະພາບໍລິຫານຂອງບໍລິສັດ.**

**ວັດຖຸປະສົງ ແລະ ເຫດຜົນ:** ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 152 ກໍານົດໃຫ້ “ສິດ ແລະ ໜ້າທີ່ ຂອງກອງປະຊຸມຜູ້ຖືຮຸ້ນແມ່ນ ຕົກລົງເງິນອຸດໜູນເຂົ້າຮ່ວມກອງປະຊຸມ ຂອງສະມາຊິກສະພາບໍລິຫານ ຂອງບໍລິສັດ”.

**ຄໍາເຫັນຂອງສະພາບໍລິຫານ:** ເຫັນດີໃຫ້ສະເໜີແກ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາ ແລະ ອະນຸມັດປັບເງິນອຸດໜູນເຂົ້າຮ່ວມກອງປະຊຸມ ຂອງສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງບໍລິສັດ ເພື່ອໃຫ້ສອດຄ່ອງກັບສະພາວະຕະຫຼາດ ຈາກເດີມດັ່ງນີ້:

1. ເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະເທື່ອ ສະເພາະຜູ້ ທີ່ເປັນສະມາຊິກອິດສະຫຼະເທົ່ານັ້ນ
   - ປະທານສະພາບໍລິຫານ 10.000.000 ກີບ ຕໍ່ 1 ຄັ້ງ;

– ຮອງປະທານສະພາບໍລິຫານ 6.600.000 ກີບ ຕໍ່ 1 ຄັ້ງ; ແລະ
– ສະມາຊິກສະພາບໍລິຫານ 6.600.000 ກີບ ຕໍ່ 1 ຄັ້ງ.

2. ເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະເທື່ອ ຂອງສະມາຊິກສະພາບໍລິຫານ ຂອງບໍລິສັດ ທີ່ບໍ່ແມ່ນສະມາຊິກອິດສະຫຼະ

– ສະມາຊິກສະພາບໍລິຫານ 4.400.000 ກີບ ຕໍ່ 1 ຄັ້ງ.

**<u>ຄະແນນສຽງທີ່ຕ້ອງໃຊ້</u>:** ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ.

**8. ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ເອກະສານປະກອບວາລະທີ 08).**

**<u>ວັດຖຸປະສົງ ແລະ ເຫດຜົນ</u>:** ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 152 ກຳນົດໃຫ້ "ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງການປັບປຸງກົດລະບຽບຂອງບໍລິສັດ".

**<u>ຄຳເຫັນຂອງສະພາບໍລິຫານ</u>:** ເຫັນດີນຳການປັບປຸງກົດລະບຽບ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສະ ເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ເພື່ອພິຈາລະນາ ແລະ ຮັບຮອງ.

**<u>ຄະແນນສຽງທີ່ຕ້ອງໃຊ້</u>:** ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຢ່າງໜ້ອຍສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງໜ້ອຍແປດສິບສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

**9. ພິຈາລະນາ ແລະ ອະນຸມັດໃຫ້ມີການເພີ່ມຈຳນວນສາຂາໃໝ່ ເຂົ້າໃນໃບທະບຽນວິສາຫະກິດຂອງບໍລິສັດ.**

**<u>ວັດຖຸປະສົງ ແລະ ເຫດຜົນ</u>:** ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 152 ກຳນົດໃຫ້ "ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງການເພີ່ມຈຳນວນສາຂາໃໝ່ ເຂົ້າໃນໃບທະບຽນວິສາຫະກິດຂອງບໍລິສັດ".

**<u>ຄຳເຫັນຂອງສະພາບໍລິຫານ</u>:** ເຫັນດີ ໃຫ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ເພື່ອພິຈາລະນາ ແລະ ອະນຸມັດໃຫ້ມີການເພີ່ມຈຳນວນສາຂາໃໝ່ເຂົ້າໃນໃບທະບຽນວິສາຫະກິດຂອງບໍລິສັດ ແລະ ມອບສິດໃຫ້ຄະນະຜູ້ອຳນວຍການ ລວມເຖິງ ການມອບສິດໃຫ້ຜູ້ອື່ນດຳເນີນວຽກງານດັ່ງກ່າວ ທີ່ກ່ຽວຂ້ອງໃຫ້ສຳເລັດ.

**<u>ຄະແນນສຽງທີ່ຕ້ອງໃຊ້</u>:** ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ.

**10. ເລື່ອງອື່ນໆ (ຖ້າມີ)**

ວາລະກອງປະຊຸມ ແລະ ຄຳເຫັນ ຂອງສະພາບໍລິຫານດັ່ງກ່າວຂ້າງຕົ້ນນັ້ນ ສະມາຊິກອິດສະຫຼະບໍ່ມີຄຳເຫັນເປັນຢ່າງອື່ນ ສຳລັບການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ **2023** ທາງບໍລິສັດ ຈະເຊີນສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ຜູ້ກວດສອບບັນຊີພາຍນອກ ແລະ ແຕ່ງຕັ້ງຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ ແລະ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເພື່ອເປັນສັກຂີພະຍານ ແລະ ຊ່ວຍດູແລກວດສອບ ໃຫ້ກອງປະຊຸມເປັນໄປຢ່າງຖືກຕ້ອງ, ໂປ່ງໃສ ຕາມກົດ

ລະບຽບ ຂອງບໍລິສັດ ແລະ ກົດໝາຍທີ່ກ່ຽວຂ້ອງໃນ ສປປ ລາວ.

ຈຶ່ງຂໍຮຽນເຊີນທ່ານຜູ້ຖືຮຸ້ນເຂົ້າຮ່ວມປະຊຸມຕາມວັນ, ເວລາ ແລະ ສະຖານ ທີ່ດັ່ງກ່າວຂ້າງເທິງ

ຂໍສະແດງຄວາມນັບຖື

ທ່ານ ສົມຈິດ ອິນທະມິດ
ປະທານສະພາບໍລິຫານ

**ໝາຍເຫດ**

1. ຜູ້ຖືຮຸ້ນທຸກທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ວັນທີ **06 ມິນາ 2024**, ຢູ່ ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊໍາລະສະສາງ ແລະ ຮັບຝາກຫຼັກຊັບ, ຖະໜົນ T4 ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ເລກໂທລະສັບ: (856-21) 454361-4, ແຟັກ: (856-21) 454 361-4.
2. ສໍາລັບຜູ້ຖືຮຸ້ນ ທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງ ກະລຸນານໍາ **ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ** (ກໍລະນີເປັນຄົນຕ່າງປະເທດ) ມາສະແດງໃນວັນປະຊຸມດ້ວຍ. ຢ່າງໃດກໍ່ຕາມ, ກະລຸນາເບິ່ງເອກະສານຄັດຕິດ ເລື່ອງເອກະສານ ແລະ ຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນເພີ່ມຕື່ມ;
3. ຫາກທ່ານບໍ່ສະດວກ ທີ່ຈະໄປຮ່ວມປະຊຸມດ້ວຍຕົນເອງ ຈະມອບສິດໃຫ້ບຸກຄົນອື່ນໄປເຂົ້າຮ່ວມປະຊຸມແທນກໍ່ໄດ້ ໂດຍມອບສິດໃຫ້ຕາມແບບ ທີ່ແນບມາພ້ອມໜັງສືນີ້ ແລະ ນໍາມາມອບໃຫ້ປະທານກອງປະຊຸມ ຫຼື ຜູ້ທີ່ ປະທານກອງປະຊຸມມອບໝາຍກ່ອນ ຜູ້ຮັບມອບສິດເຂົ້າຮ່ວມກອງປະຊຸມ ເຊິ່ງຜູ້ຮັບມອບສິດຕ້ອງນໍາ**ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ** (ກໍລະນີເປັນຄົນຕ່າງປະເທດ) ມາສະແດງໃນວັນປະຊຸມດ້ວຍ. ຢ່າງໃດກໍ່ຕາມ, ກະລຸນາເບິ່ງເອກະສານຄັດຕິດ ເລື່ອງເອກະສານ ແລະ ຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນເພີ່ມຕື່ມ;
4. ໃນກໍລະນີ ທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ສະມາຊິກອິດສະຫຼະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດດັ່ງກ່າວ ແລະ ໝາຍ (✓) ເພື່ອເລືອກເອົາສະມາຊິກອິດສະຫຼະ ຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານປະກອບ ສົ່ງເຖິງ **ທ່ານ ມິດໄຊ ເປື້ອງກາງ** ທີ່ ຫ້ອງການ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ,ຖະໜົນໂພນຕ້ອງ, ບ້ານໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ເບີໂທ +856-21 562 497 ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ **7 ເມສາ 2024.** ຢ່າງໃດກໍ່ຕາມ, ກະລຸນາເບິ່ງເອກະສານຄັດຕິດ ເລື່ອງເອກະສານ ແລະ ຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນເພີ່ມຕື່ມ ແລະ
5. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄໍາຖາມກ່ຽວກັບການມອບສິດ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມ **ທ່ານ ມິດໄຊ ເປື້ອງກາງ** ແລະ **ທ່ານ ອິນທີລາດ ທໍາມະວົງ** ເບີໂທ +856-21 562 497.

# ໃບມອບສັນທະ

ຂຽນທີ່ ............................

ວັນທີ ....... ເດືອນ .............. ປີ .......

(1) ຂ້າພະເຈົ້າ .............................................. ສັນຊາດ ............ ວັນທີ ເດືອນ ແລະ ປີເກີດ .................
ບັດປະຈຳຕົວເລກທີ .............................. ຫຼື ໜັງສືຜ່ານແດນ ເລກທີ ......................... ຢູ່ເຮືອນເລກທີ .......
ບ້ານ ....................... ຖະໜົນ ............................. ເມືອງ ........................................
ແຂວງ ...................... ປະເທດ ................................;
(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ .............. ຮຸ້ນເຊິ່ງເທົ່າກັບຈຳນວນທີ່ຈະລົງຄະແນນສຽງໄດ້;
(3) ຂໍມອບໝາຍໃຫ້ ;

ທ່ານ/ທ່ານ ນາງ ................................. ອາຍຸ ..... ປີ, ບັດປະຈຳຕົວເລກທີ ...........................
ຫຼື ໜັງສືຜ່ານແດນ ເລກທີ ..........................., ຢູ່ ເຮືອນເລກທີ ..............ຖະໜົນ ...............................
ບ້ານ ....................... ເມືອງ ...................... ແຂວງ ......................ລະຫັດໄປສະນີ ...............,
ປະເທດ .......................

ເປັນຜູ້ຕາງໜ້າ ຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ **2023** ໃນວັນທີ **08 ເມສາ 2024** ເວລາ 14:00 ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ຫຼື ມື້ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມໄດ້ 1 ໃນ 3 ຮູບແບບ (**ໝາຍເຫດ: ຜູ້ມອບສິດແມ່ນ ມີສິດເລືອກໄດ້ 1 ຮູບແບບ(ເທົ່ານັ້ນ)**) ດັ່ງນີ້:

4.1 **<u>ຮູບແບບທີ 01</u>: ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມ ທີ່ເຫັນສົມຄວນ;**

☐ ຜູ້ມອບສິດອະນຸມັດ ☐ ຜູ້ມອບສິດບໍ່ອະນຸມັດ

4.2 **<u>ຮູບແບບທີ 02:</u> ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການ ຂອງຂ້າພະເຈົ້າ ແລະ ມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ ດັ່ງລຸ່ມນີ້ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້); ຫຼື**

**ວາລະທີ 1: ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022;**

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

**ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2023;**

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

**ວາລະທີ 3: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024;**

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

**ວາລະທີ 4: ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2023;**

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

**ວາລະທີ 5: ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີພາຍນອກ ປະຈຳປີ 2024;**

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

ວາລະທີ 6: ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານຜູ້ເກົ່າ ທີ່ລາອອກໄປ;

6.1. ທ່ານ ສອນສະຫວັນ ແສງອະໄພ

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

ວາລະທີ 7: ພິຈາລະນາ ແລະ ອະນຸມັດປັບເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານຂອງບໍລິສັດ;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

ວາລະທີ 8: ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

ວາລະທີ 9: ພິຈາລະນາ ແລະ ອະນຸມັດໃຫ້ມີການເພີ່ມຈຳນວນສາຂາໃໝ່ ເຂົ້າໃນໃບທະບຽນວິສາຫະກິດຂອງບໍລິສັດ;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

4.3 <u>ຮູບແບບທີ 03:</u> ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການ ຂອງຂ້າພະເຈົ້າ ດັ່ງລຸ່ມນີ້ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້)

ວາລະທີ 1: ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2023;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 3: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 4: ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 5: ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີພາຍນອກ ປະຈຳປີ 2024;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 6: ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານຜູ້ເກົ່າ ທີ່ລາອອກໄປ;

6.1. ທ່ານ ສອນສະຫວັນ ແສງອະໄພ

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 7: ພິຈາລະນາ ແລະ ອະນຸມັດປັບເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານຂອງບໍລິສັດ;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 8: ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 9: ພິຈາລະນາ ແລະ ອະນຸມັດໃຫ້ມີການເພີ່ມຈຳນວນສາຂາໃໝ່ ເຂົ້າໃນໃບທະບຽນວິສາຫະກິດຂອງບໍລິສັດ;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

(5) ການລົງຄະແນນສຽງ ຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດ ທີ່ບໍ່ເປັນໄປຕາມ ທີ່ລະບຸໄວ້ໃນໜັງສືມອບສິດສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງ ຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

(6) ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸວັດຖຸປະສົງໃນການລົງຄະແນນສຽງ ໃນເວລາປະຊຸມໃດໄວ້ ຫຼື ລະບຸໄວ້ບໍ່ຈະແຈ້ງໃຫ້ຖືວ່າເຫັນດີ;

(7) ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳດ້ວຍຕົນເອງທຸກປະການ.

ລົງລາຍເຊັນ ................................ ຜູ້ມອບສິດ

(..........................................................)

ລົງລາຍເຊັນ ................................ ຜູ້ຮັບມອບສິດ

(..........................................................)

ລົງລາຍເຊັນ ................................................ ພະຍານ

(..........................................................)

ລົງລາຍເຊັນ ................................................ ພະຍານ

(..........................................................)

ລົງລາຍເຊັນ ................................................ ພະຍານ

(..........................................................)

**<u>ໝາຍເຫດ</u>** 1. ຜູ້ຖືຮຸ້ນ ທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວ ເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນ ໃຫ້ຜູ້ຕາງໜ້າຫຼາຍທ່ານ ເພື່ອແຍກການລົງຄະແນນສຽງໄດ້; ແລະ

2. ໜັງສືມອບສິດນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານ ເພື່ອເປັນການຮັບປະກັນຄວາມຜູກພັນ ຂອງຜູ້ມອບສິດ ແລະ ຜູ້ຕາງໜ້າໃນທາງກົດໝາຍ ຕາມກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009. ຢ່າງໃດກໍຕາມ, ໃນກໍລະນີທີ່ໜັງສືມອບສິດສະບັບນີ້ຫາກບໍ່ໄດ້ຈົດທະບຽນສານ ແລະ ໄດ້ຍື່ນຕໍ່ບໍລິສັດ, ບໍລິສັດຈະບໍ່ຮັບຜິດຊອບໃດໆ ໃນຄວາມຂັດແຍ່ງ ທີ່ເກີດຂຶ້ນລະຫວ່າງຜູ້ມອບສິດ ແລະ ຜູ້ຮັບມອບສິດ

**ລາຍຊື່, ຄວາມໝາຍ ແລະ ປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ**

ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019 ແລະ ລະບຽບ ວ່າດ້ວຍການອອກຈຳໜ່າຍຮຸ້ນ ເລກທີ 018/ຄຄຊ, ລົງວັນທີ 27 ມິຖຸນາ 2015 ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ກຳນົດໃຫ້ບໍລິສັດຈົດທະບຽນຕ້ອງມີສະມາຊິກອິດສະຫຼະຢ່າງໜ້ອຍ 1 ໃນ 3 ຂອງສະມາຊິກສະພາບໍລິຫານທັງໝົດທີ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນ ເຊິ່ງບໍ່ມີສ່ວນພົວພັນກັບຜົນປະໂຫຍດຂອງບໍລິສັດ ແລະ ສາມາດປະກອບຄຳເຫັນຢ່າງເປັນເອກະລາດ. ໃນກໍລະນີຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ມີສະມາຊິກອິດສະຫຼະຈຳນວນ 3 ທ່ານ ຈາກຈຳນວນສະມາຊິກສະພາບໍລິຫານທັງໝົດ 9 ທ່ານ ມີລາຍຊື່ ດັ່ງລຸ່ມນີ້:

1. ທ່ານ ສົມຈິດ ອິນທະມິດ — ປະທານສະພາບໍລິຫານ ແລະ ປະທານສະມາຊິກອິດສະຫຼະ;
2. ທ່ານ ຣສ.ປອ ໄຊພອນ ກອງມະນີລາ — ຮອງປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ; ແລະ
3. ທ່ານ ສອນສະຫວັນ ແສງອະໄພ — ສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະ.

**ໂດຍປະຫວັດຫຍໍ້ຂອງສະມາຊິກອິດສະຫຼະແມ່ນເປັນໄປຕາມເອກະສານຕໍ່ທ້າຍນີ້:**



**ຊື່ - ນາມສະກຸນ:** ທ່ານ ສົມຈິດ ອິນທະມິດ

**ອາຍຸ:** 64 ປີ

**ສັນຊາດ:** ລາວ

**ວຸດການສຶກສາ:** ປະລິນຍາໂທ ດ້ານ ເສດຖະສາດ ພັດທະນາ, ມະຫາວິທະຍາໄລ ຕົນ ລຸເທີ ຮານເລ ວິດເຕັນແບກ, ປະເທດ ເຢຍລະມັນ, ປີ 1985

**ທີ່ຢູ່ປະຈຸບັນ:** ບ້ານຈອມມະນີ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ໜັງສືຜ່ານແດນເລກທີ D0030771

**ປະສົບການເຮັດວຽກ:**
- ວິຊາການ ສະຖານທູດລາວ ທີ່ນະຄອນຫຼວງເບີລິນ ປີ 1985-1986;
- ວິຊາການ ພະແນກການວາງແຜນກະສິກຳ, ຄະນະກະມະການການວາງແຜນແຫ່ງລັດ ປີ 1987-1988;
- ຜູ້ຊ່ວຍຮອງລັດຖະມົນຕີ ກະຊວງການຄ້າ ແລະ ການພົວພັນເສດຖະກິດຕ່າງປະເທດ ປີ 1989-1990;
- ຮອງຫົວໜ້າກົມ ກົມຮ່ວມມືເສດຖະກິດ, ກະຊວງການຄ້າ ແລະ ພົວພັນເສດຖະກິດຕ່າງປະເທດ ປີ 1990-1993;
- ຮອງຫົວໜ້າກົມ ກົມຮ່ວມມືເສດຖະກິດຕ່າງປະເທດ, ຄະນະກຳມະການແຜນການ ແລະ ການຮ່ວມມື ປີ 1994-1996;
- ຫົວໜ້າກົມ ກົມຮ່ວມມືເສດຖະກິດອາຊຽນ ປີ 1996;
- ຄະນະ ເປັນເຈົ້າໜ້າທີ່ອາວຸໂສ ດ້ານເສດຖະກິດ ຂອງ ສປປ ລາວ ປະຈຳອາຊຽນ (SOM) ປີ 1997-2005;
- ຄະນະ ຄະນະເຈລະຈາກັບອົງການການຄ້າໂລກ ປີ 2004;
- ຫົວໜ້າກົມ ກົມເສດຖະກິດ, ກະຊວງການຕ່າງປະເທດ ປີ 1999-2007;
- ຫົວໜ້າກົມ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ປີ 2008-2011;
- ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ປີ 2011-2014;
- ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ປີ 2014-2021;
- ຮອງຫົວໜ້າຄະນະ ຄະນະກຳມະການດ້ານເສດຖະກິດ-ການເງິນສະເພາະທິດສະດີສູນກາງພັກ ວັນທີ 25/01/2022 ເຖິງປະຈຸບັນ.

**ຕຳແໜ່ງງານໃນປະຈຸບັນ:** ປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

**ວັນທີຮັບຕຳແໜ່ງ:** 07 ເມສາ 2023

**ລັກສະນະຄວາມສຳພັນ:**
- ການຖືຮຸ້ນບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ **- ບໍ່ມີ -**
- ການເປັນຜູ້ອຳນວຍການໃນກິດຈະການທີ່ແຂ່ງຂັນ ຫຼື ກ່ຽວເນື່ອງກັບທຸລະກິດຈຳ

ໜ່າຍວັດສະດຸກໍ່ສ້າງ **- ບໍ່ມີ -**

- ການມີຄວາມສຳພັນເປັນຍາດພີ່ນ້ອງນຳສະມາຊິກສະພາບໍລິຫານ/ຜູ້ຖືຮຸ້ນລາຍໃຫຍ່/ຄະນະກຳມະການບໍລິຫານຂອງບໍລິສັດ **- ບໍ່ມີ -**

- ການມີຄວາມສຳພັນທາງທຸລະກິດເຊັ່ນ: ການຊື້-ຂາຍວັດຖຸດິບ, ສິນຄ້າ, ການກູ້ຢືມເງິນນຳບໍລິສັດ **- ບໍ່ມີ -**

| | | | |
|---|---|---|---|
| **ການເຂົ້າຮ່ວມປະຊຸມ:** | **ປີ 2022** | - ສະພາບໍລິຫານ | 4/4 ຄັ້ງ |
| | **ປີ 2023** | - ສະພາບໍລິຫານ | 4/4 ຄັ້ງ |



**ຊື່ - ນາມສະກຸນ:** ທ່ານ ຮສ.ປອ. ໄຊພອນ ກອງມະນີລາ

**ອາຍຸ:** 51 ປີ

**ສັນຊາດ:** ລາວ

**ວຸດການສຶກສາ:** ປະລິນຍາເອກ ບໍລິຫານທຸລະກິດ ມະຫາວິທະຍາໄລ ຮີໂຣຊິມ່າ ປະເທດຍີ່ປຸ່ນ, ປີ 2009

**ທີ່ຢູ່ປະຈຸບັນ:** ບ້ານນາສ້ຽວ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ, ບັດປະຈຳຕົວ ເລກທີ 10-0145293

**ການອົບຮົມຕ່າງໆ:**
- ທີ່ປຶກສາບັນຊີລາວ (CPA) ຈັດໂດຍ ສະພາວິຊາຊີບການບັນຊີ ແລະ ກວດສອບລາວ ,ກົມບັນຊີ, ກະຊວງການເງິນ, ປີ 2003;
- ທີ່ປຶກສາບັນຊີອົດສະຕາລີ (CPA Australia) ຈັດໂດຍ CPA Australia, ປີ 2010;
- ການເປັນມືອາຊີບທາງດ້ານບັນຊີ ຈັດໂດຍ ສະຖາບັນວິຊາຊີບການບັນຊີສິງກະໂປ, ປີ 2019.

**ປະສົບການເຮັດວຽກ:**
- ວິຊາການ ບໍລິສັດ ລາວໂທລະຄົມ, ປີ 1995-1997;
- ຜູ້ກວດສອບພາຍໃນ ບໍລິສັດ ໄຮຄີ ແຄຄອນ ຈຳກັດ, ປີ 2001;
- ຫົວໜ້າພະແນການຕະຫລາດ ແລະ ປະຕິບັດການ ບໍລິສັດ ຄ້ຳຮຸ່ງໂຣດ ລາວ, ປີ 2001;
- ອາຈານສອນ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ປີ 2002-2011;
- ຮອງຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ປີ 2011-2017 ; ແລະ
- ຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ປີ 2017-ປັຈະບັນ.

**ຕຳແໜ່ງງານໃນປະຈຸບັນ:** - ຮອງປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

**ວັນທີຮັບຕຳແໜ່ງ:** 07 ເມສາ 2023

**ລັກສະນະຄວາມສຳພັນ:**
- ການຖືຮຸ້ນບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ **- ບໍ່ມີ -**
- ການເປັນຜູ້ອຳນວຍການໃນກິດຈະການທີ່ແຂ່ງຂັນ ຫຼື ກ່ຽວເນື່ອງກັບທຸລະກິດຈຳໜ່າຍວັດສະດຸກໍ່ສ້າງ **- ບໍ່ມີ -**
- ການມີຄວາມສຳພັນເປັນຍາດພີ່ນ້ອງນຳສະມາຊິກສະພາບໍລິຫານ/ຜູ້ຖືຮຸ້ນລາຍໃຫຍ່/ຄະນະກຳມະການບໍລິຫານຂອງບໍລິສັດ **- ບໍ່ມີ -**

- ການມີຄວາມສຳພັນທາງທຸລະກິດເຊັ່ນ: ການຊື້-ຂາຍວັດຖຸດິບ, ສິນຄ້າ, ການກູ້ຢືມເງິນນຳບໍລິສັດ **- ບໍ່ມີ -**

| | | | |
|---|---|---|---|
| **ການເຂົ້າຮ່ວມປະຊຸມ:** | **ປີ 2020** | - ສະພາບໍລິຫານ | 4/4 ຄັ້ງ |
| | **ປີ 2021** | - ສະພາບໍລິຫານ | 4/4 ຄັ້ງ |
| | **ປີ 2022** | - ສະພາບໍລິຫານ | 4/4 ຄັ້ງ |
| | **ປີ 2023** | - ສະພາບໍລິຫານ | 4/4 ຄັ້ງ |



**ຊື່ - ນາມສະກຸນ:** ທ່ານ ສອນສະຫວັນ ແສງອະໄພ

**ອາຍຸ:** 64 ປີ

**ສັນຊາດ:** ລາວ

**ວຸດການສຶກສາ:** ປະລິນຍາໂທ ກົດໝາຍ ຈຸລາລົງກອນມະຫາວິທະຍາໄລ, ບາງກອກ, ປະເທດໄທ, ປີ 2009

**ທີ່ຢູ່ປະຈຸບັນ:** ບ້ານໂພນສະຫວາດໃຕ້, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ບັດປະຈຳຕົວ ເລກທີ 01-23 031677

**ປະສົບການເຮັດວຽກ:**
- ວິຊາການ ກະຊວງຍຸຕິທຳ ປີ 1982-1985;
- ຈ່າສານ ພະແນກຍຸຕິທຳ ແຂວງວຽງຈັນ (ສານປະຊາຊົນ ແຂວງວຽງຈັນ) ປີ 1985-1987;
- ສຶກສາຢູ່ມະຫາໄລແຫ່ງຊາດ ລັດຕັດຊີກກິດສະຖານ (ອາດີດສະຫາພາບໂຊວຽດ) ປີ 1988-1993;
- ວິຊາການ ອົງການໄອຍະການປະຊາຊົນສູງສຸດ ປີ 1993-1995;
- ຫົວໜ້າອົງການໄອຍະການ ໄອຍະການເມືອງ ອົງການໄອຍະການ ເມືອງສີໂຄດຕະບອງ ປີ 1995-1998;
- ພະນັກງານສອບສວນ, ຮອງຫົວໜ້າພະແນກ ອົງການໄອຍະການປະຊາຊົນສູງສຸດ ປີ 1998-2001;
- ຫົວໜ້າພະແນກຢູ່ກົມຕິດຕາມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ ປີ 2001-2004;
- ຮອງຫົວໜ້າ ກົມຕິດຕາມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດປີ 2004-2009;
- ຮຽນຕໍ່ປະລິນຍາໂທກົດໝາຍ ຈຸລາລົງກອນມະຫາວິທະຍາໄລ, ບາງກອກ, ປະເທດໄທ, ປີ 2005-2009;
- ຫົວໜ້າກົມຕິດຕາມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ ປີ 2009-2015;
- ຫົວໜ້າກົມກວດກາ ອົງການໄອຍະການປະຊາຊົນສູງສຸດ ປີ 2015-2021;
- ເຂົ້າບຳນານ ວັນທີ 01/07/2021;
- ທະນາຍຄວາມ (ສະມາຊິກສະພາທະນາຍຄວາມລາວ) ວັນທີ 10/09/2022;
- ທີ່ປຶກສາ ບໍລິສັດຮຸ່ງເຮືອງຄຸນນະທຳທີ່ປຶກສາກົດໝາຍຈຳກັດ ວັນທີ 01/07/2021-ເຖິງປະຈຸບັນ.

**ຕຳແໜ່ງງານໃນປະຈຸບັນ:** - ສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

| | |
|---|---|
| **ວັນທີຮັບຕໍາແໜ່ງ:** | 16 ສິງຫາ 2023 |
| **ລັກສະນະຄວາມສໍາພັນ:** | - ການຖືຮຸ້ນບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ **- ບໍ່ມີ -**<br>- ການເປັນຜູ້ອໍານວຍການໃນກິດຈະການທີ່ແຂ່ງຂັນ ຫຼື ກ່ຽວເນື່ອງກັບທຸລະກິດຈໍາໜ່າຍວັດສະດຸກໍ່ສ້າງ **- ບໍ່ມີ -**<br>- ການມີຄວາມສໍາພັນເປັນຍາດພີ່ນ້ອງນໍາສະມາຊິກສະພາບໍລິຫານ/ຜູ້ຖືຮຸ້ນລາຍໃຫຍ່/ຄະນະກໍາມະການບໍລິຫານຂອງບໍລິສັດ **- ບໍ່ມີ -**<br>- ການມີຄວາມສໍາພັນທາງທຸລະກິດເຊັ່ນ: ການຊື້-ຂາຍວັດຖຸດິບ, ສິນຄ້າ, ການກູ້ຢືມເງິນນໍາບໍລິສັດ **- ບໍ່ມີ -** |
| **ການເຂົ້າຮ່ວມປະຊຸມ:** | **ປີ 2023** - ສະພາບໍລິຫານ 2/2 ຄັ້ງ |

# ເອກະສານ ແລະ ຫຼັກຖານ ທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງ

ເພື່ອຄວາມສະດວກ ໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ ແລະ ກະກຽມເອກະສານຕາມ ທີ່ກຳນົດດ້ານລຸ່ມນີ້ມາພ້ອມ. ຢ່າງໃດກໍ່ຕາມ, ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້

**ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ**

(1.) ກໍລະນີຜູ້ຖືຮຸ້ນທີ່ເປັນບຸກຄົນທຳມະດາ.

(1.1.) ຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງ ໃຫ້ສະແດງເອກະສານ ທີ່ລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ຖືຮຸ້ນ ແລະ ຍັງບໍ່ໝົດອາຍຸເທື່ອ ເຊັ່ນ ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີທີ່ເປັນບຸກຄົນຕ່າງປະເທດ)

(1.2.) ຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ໃຫ້ແຈ້ງເອກະສານ ດັ່ງລຸ່ມນີ້ ແລະ ປະຕິບັດຕາມວິທີການມອບໝາຍຕາມທີ່ໄດ້ແຈ້ງໃນເອກະສານຄັດຕິດ ຂອງໜັງສືເຊີນປະຊຸມນີ້:

- ໜັງສືມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີປະຊຸມ ເຊິ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງຂອງຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;
- ສຳເນົາເອກະສານ ທີ່ທາງລັດຖະການອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍຕາມຂໍ້ 1.1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ; ແລະ
- ເອກະສານ ທີ່ທາງລັດຖະການອອກໃຫ້ ຂອງຜູ້ຕາງໜ້າ ເຊິ່ງປາກົດພາບຖ່າຍ ແລະ ຍັງບໍ່ໝົດອາຍຸເທື່ອ ເຊັ່ນ ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີທີ່ເປັນບຸກຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2.) ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນ.

(2.1.) ກໍລະນີຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ແຈ້ງເອກະສານ ດັ່ງລຸ່ມນີ້:

- ເອກະສານທີ່ທາງລັດຖະການອອກໃຫ້ ແລະ ປາກົດພາບຖ່າຍ ຂອງຜູ້ອຳນວຍການ ທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ເຊິ່ງເປັນຜູ້ຖືຮຸ້ນ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີທີ່ເປັນບຸກຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ; ແລະ
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນ ທີ່ເປັນນິຕິບຸກຄົນ ທີ່ເປັນຜູ້ຖືຮຸ້ນ ເຊິ່ງມີຂໍ້ຄວາມສະແດງໃຫ້ເຫັນວ່າຜູ້ອຳນວຍການ ຂອງນິຕິບຸກຄົນ ທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນ ທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການ ທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ພ້ອມປະທັບກາບໍລິສັດ (ຖ້າມີ).

(2.2.) ກໍລະນີຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າ (ຜູ້ທີ່ບໍ່ແມ່ນຜູ້ອຳນວຍການ ທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ) ເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານ ດັ່ງລຸ່ມນີ້ ແລະ ປະຕິບັດຕາມວິທີການມອບໝາຍຕາມທີ່ໄດ້ແຈ້ງໃນເອກະສານຄັດຕິດຂອງໜັງສືເຊີນປະຊຸມນີ້:

- ໜັງສືມອບສິດຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນຂອງຜູ້ອຳນວຍການ ທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນ ພ້ອມປະທັບກາບໍລິສັດ (ຖ້າມີ) ໂດຍໃຫ້ຂຽນຊື່ແຈ້ງຂອງຜູ້ມອບສິດ ແລະ ຜູ້ຮັບມອບສິດ;
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນ ທີ່ເປັນນິຕິບຸກຄົນດັ່ງກ່າວ ເຊິ່ງມີຂໍ້ຄວາມສະແດງໃຫ້ເຫັນວ່າຜູ້ອຳນວຍການ ຂອງນິຕິບຸກຄົນ ທີ່ລົງລາຍເຊັນ ມີອຳນາດກະທຳການຜູກພັນນິຕິບຸກຄົນ ທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການ ທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ພ້ອມປະທັບກາບໍລິສັດ (ຖ້າມີ);
- ສຳເນົາເອກະສານ ທີ່ທາງລັດຖະການອອກໃຫ້ ແລະ ປາກົດພາບຖ່າຍຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີທີ່ເປັນບຸກຄົນຕ່າງປະເທດ) ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ອຳນວຍການທ່ານດັ່ງກ່າວ; ແລະ
- ເອກະສານ ທີ່ທາງລັດຖະການອອກໃຫ້ ແລະ ປາກົດພາບຖ່າຍ ຂອງຜູ້ຕາງໜ້າ ເຊິ່ງຍັງບໍ່ໝົດອາຍຸເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີທີ່ເປັນບຸກຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

**<u>ໝາຍເຫດ:</u>** ໃນກໍລະນີ ທີ່ຜູ້ຖືຮຸ້ນເປັນບຸກຄົນຕ່າງປະເທດໃຫ້ປະຕິບັດຕາມຂໍ້ (1.) ຫຼື ຂໍ້ (2.) ແລ້ວແຕ່ກໍລະນີ ເຊິ່ງຫາກເອກະສານດັ່ງກ່າວເປັນພາສາອື່ນ ນອກເໜືອຈາກພາສາລາວ ຫຼື ພາສາອັງກິດ ຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ໂດຍໃຫ້ບຸກຄົນທຳມະດາ ຫຼື ຜູ້ອຳນວຍການ ທີ່ມີອຳນາດລົງລາຍເຊັນຜູກພັນນິຕິບຸກຄົນນັ້ນລົງລາຍເຊັນຮັບຮອງສະບັບແປພາສາດັ່ງກ່າວດ້ວຍ.

**<u>ການມອບໝາຍ</u>**

ຜູ້ຖືຮຸ້ນ ທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການ ດັ່ງນີ້:

(1.) ມອບໝາຍໃຫ້ຜູ້ໃດຜູ້ໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະຂອງສະພາບໍລິຫານ ຂອງບໍລິສັດທ່ານໃດທ່ານໜຶ່ງ ໂດຍໃຫ້ລະບຸຊື່ພ້ອມກາເຄື່ອງໝາຍ ✓ ລົງໃນຊ່ອງ ☐ ໜ້າຊື່ຜູ້ຮັບມອບສິດຕາມທີ່ລະບຸໄວ້ໃນໃບມອບສິດ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບສິດໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ; ແລະ

(2.) ນຳສົ່ງໜັງສືມອບສິດຄືນ ທ່ານ ມິດໄຊ ເບື້ອງກາງ ທີ່ ຫ້ອງການ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ຖະໜົນ ໂພນຕ້ອງ, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ເບີໂທ +856-21 562 497 ແລະ ກະລຸນາສົ່ງເຖິງ ບໍລິສັດກ່ອນ ວັນທີ **08 ເມສາ 2024** ຫຼື ນຳສົ່ງໜ້າສະຖານທີ່ ຈັດກອງປະຊຸມກ່ອນເວລາເປີດກອງປະຊຸມຢ່າງໜ້ອຍ 1 ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນ ທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

<u>**ການລົງທະບຽນ**</u>

ບໍລິສັດເປີດຮັບລົງທະບຽນ ຕັ້ງແຕ່ເວລາ 13:00 ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນ ເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

(1.) ກໍລະນີມາດ້ວຍຕົນເອງ

(1.1. ໃຫ້ຕິດຕໍ່ຈຸດລົງທະບຽນ ແລະ ສະແດງເອກະສານ ແລະ ຫຼັກຖານ ທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ; ແລະ

(1.2.) ຮັບເອກະສານຮັບຮອງການລົງທະບຽນ ແລະ ບັດອອກສຽງລົງຄະແນນແຍກຕາມວາລະ.

(2.) ກໍລະນີມອບສິດໃຫ້ບຸກຄົນອື່ນ

(2.1.) ໃຫ້ຕິດຕໍ່ຈຸດກວດເອກະສານ ພ້ອມທັງສະແດງເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ;

(2.2.) ຕິດຕໍ່ຈຸດລົງທະບຽນ ຢື່ນເອກະສານຕາມຂໍ້ (2.1) ຂ້າງຕົ້ນ ເຊິ່ງໄດ້ຜ່ານການກວດສອບແລ້ວ; ຮັບເອ

ກະສານຮັບຮອງການລົງທະບຽນ ແລະ ບັດອອກສຽງລົງຄະແນນແຍກຕາມວາລະ (ສະເພາະກໍລະນີຜູ້ມອບສິດບໍ່ໄດ້ອອກສຽງລົງຄະແນນໄວ້ໃນໜັງສືມອບສິດ).

<u>**ການລົງຄະແນນສຽງ ແລະ ການນັບຜົນການລົງຄະແນນສຽງ**</u>

(1.) ການລົງຄະແນນສຽງ:

- ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດ ທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນ ເທົ່າກັບ ໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.

  ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດ ທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນ ທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.

  ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງ ທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ເຊິ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນ ທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມ

ຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນ ທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

(2.) ການນັບຜົນການລົງຄະແນນສຽງ:

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງ ຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນ ທີ່ມອບໝາຍໃຫ້ຜູ້ຕາງໜ້າ ທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາ ທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີ ມາຫັກອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມານັບເປັນຄະແນນສຽງຕື່ມອີກ.

## ເອກະສານປະກອບວາລະທີ 1: ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022

**ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2022**

**ຂອງ**

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

**("ບໍລິສັດ")**

---

**ເວລາ ແລະ ສະຖານທີ່**

ກອງປະຊຸມຈັດຂຶ້ນໃນວັນທີ 7 ເມສາ 2023 ເວລາ 14:00 ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

**ກ່ອນເປີດກອງປະຊຸມ**

ທ່ານ ສົມຈິດ ອິນທະມິດ ປະທານສະພາບໍລິຫານ ເປັນປະທານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2022 ໃນຄັ້ງນີ້. ກອງປະຊຸມມີຜູ້ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ **32** ທ່ານ ແລະ ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈໍານວນ **30** ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ **62** ທ່ານ ເຊິ່ງຖືຮຸ້ນລວມກັນທັງໝົດ **152.819.600** ຮຸ້ນ ຫຼື ເທົ່າກັບ **92,62** ສ່ວນຮ້ອຍ ຂອງຈໍານວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ, ປະທານ ຈຶ່ງໄດ້ກ່າວເປີດກອງປະຊຸມ ແລະ ໄດ້ມອບໝາຍໃຫ້ພິທີກອນແນະນໍາ ສະມາຊິກສະພາບໍລິຫານ ລວມທັງເຈົ້າໜ້າທີ່ ທີ່ກ່ຽວຂ້ອງແຕ່ລະທ່ານ ທີ່ເຂົ້າຮ່ວມກອງປະຊຸມ ລາຍລະອຽດມີດັ່ງຕໍ່ໄປນີ້:

**ສະມາຊິກສະພາບໍລິຫານ ທີ່ເຂົ້າຮ່ວມກອງປະຊຸມ**

| | | | |
|---|---|---|---|
| 1. | ທ່ານ ສົມຈິດ | ອິນທະມິດ | ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ; |
| 2. | ທ່ານ ຣສ.ປອ ໄຊພອນ | ກອງມະນີລາ | ຮອງປະທານສະພາບໍລິຫານ, ສະມາຊິກອິດສະຫຼະ; |
| 3. | ທ່ານ ວັດດານາ | ສຸຄະບັນດິດ | ສະມາຊິກສະພາບໍລິຫານ; |
| 4. | ທ່ານ ບຸນເຕີມ | ກົມມິດຕະພາບ | ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ; |
| 5. | ທ່ານ ພັນໂນລາ | ສຸຄະບັນດິດ | ສະມາຊິກສະພາບໍລິຫານ |
| 6. | ທ່ານ ກິດສະດາ | ສຸຄະບັນດິດ | ສະມາຊິກສະພາບໍລິຫານ; |
| 7. | ທ່ານ ນາງ ຄໍາໄຂ | ລໍວັນໄຊ | ສະມາຊິກສະພາບໍລິຫານ; |
| 8. | ທ່ານ ນາງ ຊຸຕິການ | ສີແສງຈັນ | ສະມາຊິກສະພາບໍລິຫານ; ແລະ |
| 9. | ທ່ານ ພິພົບ | ອາດສະໝາອາຊາສະກຸນ | ສະມາຊິກສະພາບໍລິຫານ; |

ພິທີກອນໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ໃນມື້ນີ້ມີສະມາຊິກສະພາບໍລິຫານຈໍານວນ **2** ທ່ານ ໄດ້ແກ່ **ທ່ານ ນາງ ຊຸຕິການ ສີແສງຈັນ** ແລະ **ທ່ານ ຣສ.ປອ ໄຊພອນ ກອງມະນີລາ** ໄດ້ເຂົ້າຮ່ວມກອງປະຊຸມໂດຍຜ່ານ video conference ທາງໄກແທນ.

**<u>ເຈົ້າໜ້າທີ່ ແລະ ແຂກຮັບເຊີນທີ່ກ່ຽວຂ້ອງ</u>**

| | | |
|---|---|---|
| 1. | ທ່ານ ສຸພັກ ຖິ່ນໄຊພອນ | ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ |
| 2. | ທ່ານ ອະພິສິດ ທ່ຽງຕົງພິນໂຍ | ຜູ້ຕາງໜ້າຈາກບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) |
| | ທ່ານ ອາເມັກ ວິໄລສານ | ຜູ້ຕາງໜ້າຈາກບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) |
| 3. | ທ່ານ ບຸນຖິມ ຟອງວິລາດ | ຜູ້ຕາງໜ້າຈາກ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, |
| | ທ່ານ ລິດສະໝອນ ສໍພາບມີໄຊ | ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ; |
| 4. | ທ່ານ ນາງ ວັນນະພອນ ສຸນັນທາ | ຜູ້ຕາງໜ້າຈາກສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ |
| | ທ່ານ ນາງ ອານຸວັນ ທຳມະວົງ | ໃນນາມຫົວໜ້າຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ; |
| 5. | ທ່ານ ນາງ ມະທິກອນ ອິນທະວົງ | ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ; |
| 6. | ທ່ານ ອິນທິລາດ ທຳມະວົງ | ຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ,ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ. . |

ຫຼັງຈາກນັ້ນ ພິທີກອນໄດ້ລາຍງານແຕ່ລະວາລະຂອງການປະຊຸມໃນມື້ນີ້ ແລະ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຊາບເຊິ່ງມີລາຍລະອຽດ ດັ່ງນີ້:

**<u>ວາລະກອງປະຊຸມ</u>**:

1. ວາລະທີ 1. ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021;
2. ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດປະຈຳປີ 2022 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2022;
3. ວາລະທີ 3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດ ຂອງບໍລິສັດປະຈຳປີ 2023;
4. ວາລະທີ 4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2022;
5. ວາລະທີ 5. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2023;
6. ວາລະທີ 6. ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານ ແທນສະມາຊິກສະພາບໍລິຫານ ທີ່ຄົບວາລະ;

7. ວາລະທີ 7. ພິຈາລະນາ ແລະ ອະນຸມັດໃຫ້ບໍລິສັດອອກຈຳໜ່າຍຮຸ້ນກູ້ ເພື່ອນຳໃຊ້ໃນການດຳເນີນທຸລະກິດ ຂອງບໍລິສັດ ໃນວົງເງິນບໍ່ເກີນ 120 ລ້ານບາດໄທ ຫຼື ທຽບເທົ່າໃນສະກຸນເງິນໂດລາສະຫະລັດ;
8. ວາລະທີ 8. ເລື່ອງອື່ນໆ (ຖ້າມີ).

**<u>ການລົງຄະແນນສຽງ:</u>**

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ພິທີກອນຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ.

  ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ ໃຫ້ທ່ານໝາຍເຄື່ອງໝາຍຄູນ (**x**) ແລະ ຂຽນຊື່, ນາມສະກຸນ ລົງໃນບັດລົງຄະແນນໃນວາລະນັ້ນໆ ທີ່ມີເຄື່ອງໝາຍບາໂຄ້ດປະຈຳຕົວຜູ້ຖືຮຸ້ນແຕ່ລະທ່ານ ເຊິ່ງເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.

  ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ເຊິ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

**<u>ການນັບຜົນການລົງຄະແນນສຽງ:</u>**

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມໄດ້ຮັບຊາບຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີ ວ່າມີຈັກສຽງ

ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງທີ່ປະທານໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ເວລາຕໍ່ມາ, ທ່ານປະທານໃນກອງປະຊຸມໄດ້ດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ **2022** ໂດຍໄດ້ລາຍງານເປັນແຕ່ລະວາລະ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

**<u>ວາລະທີ 1. ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021.</u>**

ປະທານສະພາບໍລິຫານໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງ ບົດລາຍງານບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ເຊິ່ງກອງປະຊຸມໃນຄັ້ງນັ້ນແມ່ນມີຜູ້ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ **27** ທ່ານ ແລະ ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 41 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ **68** ທ່ານ ເຊິ່ງຖືຮຸ້ນລວມກັນທັງໝົດ **149.789.400** ຮຸ້ນ ຫຼື ເທົ່າກັບ **90,78** ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຈຶ່ງຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ ໂດຍມີລາຍລະອຽດແຕ່ລະວາລະດັ່ງຕໍ່ໄປນີ້:

– ວາລະທີ 1. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020;
– ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດາເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2021 ແລະ ບົດລາຍງານການເງິນ ຂອງບໍລິສັດ ປະຈຳປີ 2021;
– ວາລະທີ 3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2022;
– ວາລະທີ 4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປີ 2021;
– ວາລະທີ 5. ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີຂອງຜູ້ກວດສອບບັນຊີພາຍນອກ ປີ 2022;
– ວາລະທີ 6. ພິຈາລະນາການແຕ່ງຕັ້ງ ປະທານ ແລະ ຮອງປະທານ ສະພາບໍລິຫານ ແທນປະທານ ແລະ ຮອງປະທານ ສະພາບໍລິຫານ ຜູ້ເກົ່າທີ່ລາອອກໄປ;
– ວາລະທີ 7. ພິຈາລະນາ ແລະ ອະນຸມັດປັບເງິນອຸດໜູນເຂົ້າຮ່ວມກອງປະຊຸມ ຂອງສະມາຊິກສະພາບໍລິຫານຂອງບໍລິສັດ.

ທັງນີ້, ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດລາຍງານບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021.

ຫຼັງຈາກ ປະທານສະພາບໍລິຫານໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດລາຍງານບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **152.819.600** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>**ມະຕິ**</u>: ຮັບຮອງເອົາບົດລາຍງານບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ **2021.**

<u>**ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດປະຈຳປີ 2022 ແລະ ບົດລາຍງານການເງິນ ຂອງບໍລິສັດ ປະຈຳປີ 2022.**</u>

ປະທານສະພາບໍລິຫານໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2022 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ **2022** ເຊິ່ງຜ່ານການພິຈາລະນາຈາກສະພາບໍລິຫານ ແລະ ໄດ້ມີການກວດສອບໂດຍຜູ້ກວດສອບພາຍນອກແລ້ວ ໂດຍບໍລິສັດໄດ້ເປີດເຜີຍບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ແລະ ບົດລາຍງານການເງິນຂອງບໍລິສັດປະຈຳປີ **2022** ໄວ້ໃນເວັບໄຊຂອງບໍລິສັດ ແລະ ເວັບໄຊຕະຫຼາດຫຼັກຊັບລາວເຊິ່ງມີເນື້ອໃນສຳຄັນ ຕາມທີ່ **ທ່ານ ພັນໂນລາ ສຸຄະບັນດິດ** ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ ໄດ້ລາຍງານ ດັ່ງນີ້:

ບໍລິສັດມີລາຍຮັບຈາກການຂາຍລວມໃນປີ **2021** ເທົ່າກັບ **455.188.000.941** ກີບ ໃນປີ **2022** ໄດ້ມີລາຍຮັບລວມເພີ່ມຂຶ້ນມາເປັນ **647.161.515.668** ກີບ ເຫັນໄດ້ວ່າມີລາຍຮັບລວມເພີ່ມຂຶ້ນໃນອັດຕາສ່ວນ **42,17** ສ່ວນຮ້ອຍ ເມື່ອທຽບຈາກລາຍຮັບຈາກການຂາຍປີ **2021.** ເນື່ອງຈາກວ່າ ບໍລິສັດໄດ້ມີການເພີ່ມຄວາມຫຼາກຫຼາຍ ຂອງສິນຄ້າ ແລະ ມີການເພີ່ມຈຳນວນສິນຄ້າໃໝ່ໆເຂົ້າມາ ບວກກັບໄດ້ມີຍອດຂາຍຈາກສາຂາໃໝ່ເພີ່ມຂຶ້ນຕາມລຳດັບ, ບໍລິສັດມີກຳໄລສຸດທິໃນປີ **2021** ເທົ່າກັບ **24.669.486.670** ກີບ ແລະ ມີກຳໄລສຸດທິໃນປີ **2022** ເທົ່າກັບ **56.611.713.277** ກີບ, ໃນປີ **2021** ມີອັດຕາກຳໄລສຸດທິເທົ່າກັບ **5,42** ສ່ວນຮ້ອຍ ແລະ ໃນປີ **2022** ມີອັດຕາກຳໄລສຸດທິເພີ່ມຂຶ້ນເປັນ **8,75** ສ່ວນຮ້ອຍ ຂອງລາຍຮັບລວມ. ສາເຫດທີ່ບໍລິສັດມີກຳໄລສຸດທິເພີ່ມຂຶ້ນເກີດຈາກ ບໍລິສັດ ໄດ້ມີລາຍຮັບຈາກການຂາຍທັງສາຂາເກົ່າ ແລະ ຈາກສາຂາໃໝ່ເພີ່ມຂຶ້ນ, ສ່ວນໃນດ້ານຊັບສິນລວມໃນ ວັນທີ **31** ທັນວາ **2021** ມີຊັບສິນລວມເທົ່າກັບ **949.644.207.429** ກີບ ໃນວັນທີ **31** ທັນວາ **2022** ເພີ່ມຂຶ້ນເປັນ **1.392.681.504.934** ກີບ, ການທີ່ມີຊັບສິນລວມເພີ່ມຂຶ້ນຍ້ອນວ່າ ບໍລິສັດໄດ້ມີສິ່ງປຸກສ້າງອາຄານ ແລະ ຊື້ອຸປະກອນ ສຳລັບສາຂາໃໝ່ເຊັ່ນ: ສາຂາທ່າແຂກ (ແຂວງ ຄຳມ່ວນ) ແລະ ສາຂາສະຫວັນນະເຂດ (ແຂວງ ສະຫວັນນະເຂດ) ເພີ່ມຂຶ້ນ ພ້ອມດຽວກັນນັ້ນເຄື່ອງສະຕ໋ອກໃນສາງກໍ່ເພີ່ມຂຶ້ນ ຕາມການຂະຫຍາຍສາຂາເຫຼົ່ານັ້ນ; ສ່ວນວ່າທາງດ້ານໜີ້ສິນລວມກໍ່ໄດ້ເພີ່ມຂຶ້ນຈາກ

**189.925.037.322** ກີບ ມາເປັນ **243.592.455.713** ກີບ ເຊິ່ງໜີ້ສິນທີ່ເພີ່ມຂຶ້ນສ່ວນໃຫຍ່ແມ່ນໜີ້ສິນ ໝູນວຽນເພື່ອການຄ້າ ແລະ ໜີ້ເງິນກູ້ຢືມຈາກສະຖາບັນການເງິນ, ໃນວັນທີ **31** ທັນວາ **2021** . ລວມທຶນຈາກຜູ້ຖືຮຸ້ນທັງໝົດເທົ່າກັບ **759.719.170.107** ກີບ ເຊິ່ງໃນວັນທີ **31** ທັນວາ **2022** ເພີ່ມຂຶ້ນເປັນ **1.149.089.049.221** ກີບ ເຊິ່ງສາເຫດມາຈາກບໍລິສັດໄດ້ມີການຫັກເງິນສຳຮອງຕາມກົດໝາຍ ແລະ ເງິນສຳຮອງອື່ນໆ ເພີ່ມເຂົ້າມາ ນອກຈາກນັ້ນຍັງມີຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນເພີ່ມຂຶ້ນ ສ່ວນກຳໄລສະສົມໄດ້ເພີ່ມຂຶ້ນ ຈາກ **180.915.608.468** ກີບ ມາເປັນ **217.954.979.089** ກີບ ເນື່ອງຈາກວ່າບໍລິສັດໄດ້ມີກຳໄລສຸດທິຈາກຜົນການດຳເນີນທຸລະກິດໃນປີ **2022** ເພີ່ມຂຶ້ນ.

ທັງນີ້, ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ **2022** ແລະ ບົດລາຍງານການເງິນຂອງບໍລິສັດປະຈຳປີ **2022.**

ຫຼັງຈາກ **ທ່ານ ພັນໂນລາ ສຸຄະບັນດິດ** ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ ໄດ້ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 2 ແລ້ວ, ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

❖ **ຄຳຖາມຈາກ ທ່ານ ກິທອງ ອຸ່ນເພັງວົງ ຜູ້ຖືຮຸ້ນ:** ຈາກການລາຍງານອັດຕາສ່ວນຄວາມສາມາດໃນການຊຳລະໜີ້ (DSCR) ເຫັນວ່າເພີ່ມຂຶ້ນ ຈາກປີ2021 ຢູ່ທີ່ 4 ເທົ່າ ມາປີ2022 ເປັນ 5 ເທົ່າ ນີ້ໝາຍຄວາມວ່າແນວໃດ?

- **ທ່ານ ພັນໂນລາ ສຸຄະບັນດິດ** ຮອງຜູ້ອຳນວຍການໃຫ່ຍ, ຜູ້ອຳນວຍການຝ່າຍການເງິນ: ສະແດງຄວາມຂອບໃຈຕໍ່ກັບຄຳຖາມຂອງ **ທ່ານ ກິທອງ ອຸ່ນເພັງວົງ** ກ່ຽວກັບອັດຕາສ່ວນຄວາມສາມາດໃນການຊຳລະໜີ້(DSCR) ໂດຍຈະມາຈາກການປຽບທຽບລະຫວ່າງລາຍໄດ້ຈາກການດຳເນີນງານສຸດທິ ກັບ ລາຍຈ່າຍທາງການເງິນທີ່ເກີດຈາກ ເງິນຕົ້ນ ແລະ ດອກເບ້ຍ ຂອງເງິນກູ້ ທີ່ຕ້ອງຈ່າຍໃນແຕ່ລະຊ່ວງເວລາ ຕໍ່ເດືອນ ຫຼື ຕໍ່ປີ, ຖ້າຫາກຄ່າຍິ່ງສູງຍິ່ງດີ ສະແດງໃຫ້ເຫັນວ່າມີຄວາມສາມາດໃນການຊຳລະໜີ້ໄດ້ເຖິງ 5 ເທົ່າ.

❖ **ຄຳຖາມຈາກ ທ່ານ ສຸກສາຄອນ ຈັນມີສະຫວ່າງ ຜູ້ຖືຮຸ້ນ:** ເບິ່ງຈາກບົດລາຍງານການເງິນແລ້ວເຫັນວ່າມີ ໜີ້ສິນ ເພີ່ມຂຶ້ນຢາກຮູ້ວ່າສາເຫດຂອງການເພີ່ມຂຶ້ນ ແມ່ນເພີ່ມຂຶ້ນຈາກສາເຫດຫຍັງ?

- **ທ່ານ ພັນໂນລາ ສຸຄະບັນດິດ** ຮອງຜູ້ອຳນວຍການໃຫ່ຍ ຜູ້ອຳນວຍການຝ່າຍການເງິນ: ສະແດງຄວາມຂອບໃຈຕໍ່ກັບຄຳຖາມຂອງ **ທ່ານ ສຸກສາຄອນ ຈັນມີສະຫວ່າງ** ການເພີ່ມຂຶ້ນຂອງໜີ້ສິນ ນັ້ນຫຼັກໆແມ່ນການເພີ່ມຂຶ້ນຂອງ ໜີ້ສິນໝູນວຽນ ເພີ່ມຈາກ ສ່ວນໝູນວຽນຂອງເງິນໃຫ້ກູ້ຢືມໄລຍະຍາວ, ອາກອນກຳໄລຄ້າງຈ່າຍ ແລະ ເພີ່ມຈາກ ໜີ້ສິນບໍ່ໝູນວຽນ ເຊັ່ນ ເງິນກູ້ຢືມໄລຍະຍາວ ເຊິ່ງໄດ້ນຳໃຊ້ເຂົ້າໃນການດຳເນີນທຸລະກິດ ຂອງບໍລິສັດ.

ຈາກນັ້ນ, ປະທານ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ **2022** ແລະ ບົດລາຍງານການເງິນຂອງບໍລິສັດປະຈຳປີ **2022** ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນ

ຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **152.819.600** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ:</u>** ເຫັນດີ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ **2022** ແລະ ບົດລາຍງານການເງິນຂອງບໍລິສັດປະຈຳປີ **2022**.

**<u>ວາລະທີ 3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2023.</u>**

ປະທານກອງປະຊຸມໄດ້ສະເໜີແຜນການດຳເນີນທຸລະກິດ ຂອງບໍລິສັດປະຈຳປີ **2023** ຕໍ່ກອງປະຊຸມໂດຍລາຍລະອຽດຫຼັກ ຂອງແຜນດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ **2023** ແມ່ນເປັນໄປຕາມທີ່ **ທ່ານ ອັດດານາ ສຸຄະບັນດິດ** ຜູ້ອຳນວຍການໃຫຍ່ຂອງບໍລິສັດ ເປັນຜູ້ລາຍງານ ດັ່ງນີ້:

ວຽກງານດ້ານການຂາຍໃນປີ **2023** ບໍລິສັດຕັ້ງເປົ້າໝາຍຍອດຂາຍໃຫ້ເຕີບໂຕທີ **10 ສ່ວນຮ້ອຍ** ເມື່ອທຽບກັບປີທີ່ຜ່ານມາ ທັງນີ້ຈາກການປະເມີນໃນເລື່ອງປັດໄຈສະພາບແວດລ້ອມທັງພາຍໃນ ແລະ ພາຍນອກ ທີ່ຍັງມີຄວາມບໍ່ແນ່ນອນສູງ ຈາກພາວະເສດຖະກິດໂລກ, ໂລກລະບາດ ແລະ ກຳລັງສັ່ງຊື້ທີ່ລົດລົງ, ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວບໍລິສັດໄດ້ວາງແຜນປະຕິບັດດັ່ງນີ້::

1. ຂະຫຍາຍສິນຄ້າທີ່ມີຄຸນະພາບ ໃນແຕ່ລະລະດັບຄວາມຕ້ອງການຂອງລູກຄ້າ (Segment) ໃຫ້ຄົບຖ້ວນຂຶ້ນ;
2. ເພີ່ມສິນຄ້າໃໝ່ທົດແທນສິນຄ້າເກົ່າ ທີ່ລ້າສະໄໝ ເພື່ອຕອບໂຈດລູກຄ້າ ທີ່ປ່ຽນແປງຕະຫລອດເວລາ;
3. ລົດຕົ້ນທຶນສິນຄ້າຈາກການຊື້ສິນຄ້າທີ່ມີຟອມ D ແລະ E;
4. ເພີ່ມການຕິດຕັ້ງ ແລະ ບໍລິການຫຼັງການຂາຍໃຫ້ມີປະສິດທິພາບຂຶ້ນ;
5. ຂະຫຍາຍຕະຫຼາດໃໝ່ ພື້ນທີ່ໃໝ່ ໃຫ້ກວ້າງຂວາງຂຶ້ນ;
6. ປະສານທັງ 3 ຊ່ອງທາງການຂາຍຫຼັກຄື: ລູກຄ້າທົ່ວໄປ, ລູກຄ້າໂຄງການ ແລະ ລູກຄ້າຮ້ານຄ້າ ແລະ ສຶກສາຄວາມຕ້ອງການ ຂອງລູກຄ້າໃນແຕ່ລະລະດັບ (Segment) ເພື່ອເພີ່ມຍອດຂາຍ;
7. ປະສານການຂາຍທັງ Offline ແລະ Online ເຂົ້າກັນ ປະຈຸບັນມີການພັດທະນາລະບົບການປະສານງານທັງການຂາຍ Offline ແລະ Online ເຂົ້າກັນ ເພື່ອເພີ່ມຍອດຂາຍໃຫ້ຫຼາຍຂຶ້ນ;
8. ພັດທະນາການສົ່ງມອບໃຫ້ໄວຂຶ້ນ.

ສຳລັບວຽກງານການຕະຫຼາດ ເພື່ອໃຫ້ບັນລຸເປົ້າໝາຍການຂະຫຍາຍໂຕດັ່ງກ່າວ ທັງເປັນການສ້າງພື້ນຖານໄລຍະຍາວ ພວກເຮົາໄດ້ມີການວາງແຜນການຕະຫລາດດັ່ງນີ້:

1. ສ້າງການຈົດຈຳແບຣນ “**ສຸວັນນີ**” ຫຼາຍຂຶ້ນຜ່ານຮູບແບບ ຂອງປ້າຍໂຄສະນາຕາມປ້າຍສາທາລະນະ, ສື່ໂຄສະນາທາງ Online ແລະ Offline ອື່ນໆ,
2. ໂຄສະນາຄຸນນະພາບສິນຄ້າ ແລະ ຄຸນປະໂຫຍດສິນຄ້າຜ່ານທາງ Online ແລະ Offline ຫຼາຍຂຶ້ນ,
3. ສົ່ງເສີມການຊ່ວຍເຫລືອສັງຄົມ ຜ່ານໂຄງການ **“ສ້າງຮອຍຍິ້ມ ດ້ວຍການແບ່ງປັນ”** ເຊັ່ນ: ຊ່ວຍເຫຼືອໂຮງຮຽນ, ໂຮງໝໍ,ການບໍລິຈາກເລືອດ, ແຈກອຸປະກອນກິລາ ແລະ ການສຶກສາ ໃນເຂດຫ່າງໄກສອກຫຼີກ ແລະ ຊ່ວຍ

ບັນເທົາໄພພິບັດຕ່າງໆ,

4. ສຳຫຼວດຄວາມເພິງພໍໃຈຂອງລູກຄ້າ ແລະ ສຶກສາຄວາມຕ້ອງການ ຂອງລູກຄ້າກຸ່ມເປົ້າໝາຍ ເພື່ອປັບປຸງແກ້ໄຂຂໍ້ບົກຜ່ອງ ແລະ ສົ່ງເສີມຈຸດແຂງ ຂອງບໍລິສັດໃຫ້ດີຂຶ້ນ,
5. ສ້າງ Platform ແລະ ຈັດທຳສື່ໂຄສະນາຜ່ານທາງ Online ແລະ Offline ເພື່ອສື່ສານການຕະຫຼາດໄປສູ່ກຸ່ມລູກຄ້າເປົ້າໝາຍໃນແຕ່ລະທ້ອງຖິ່ນ,
6. ຈັດທຳໂປໂມຊັນ ສິນຄ້າໄປສູ່ແຕ່ລະກຸ່ມລູກຄ້າເປົ້າໝາຍ ເພື່ອກະຕຸ້ນຍອດຂາຍ.

ສຳລັບຍຸດທະສາດອົງກອນ ແຜນການພັດທະນາຈັດການ ແມ່ນ :

1. ສືບຕໍ່ປັບປຸງມາດຕະຖານຮ້ານ, ມາດຕະຖານການບໍລິການ ແລະ ການຈັດວາງສິນຄ້າໃໝ່ເພື່ອໃຫ້ຕອບໂຈດລູກຄ້າໃຫ້ຫຼາຍຂຶ້ນ,
2. ສືບຕໍ່ຮັກສາມາດຕະຖານ ISO 9001 VERSION 2015 ໃຫ້ດີຂຶ້ນ,
3. ນຳໃຊ້ ໄອທີ ເຂົ້າສູ່ລະບົບການຈັດການໃຫ້ຫຼາຍຂຶ້ນຜ່ານການຂຽນ Application ຕ່າງໆ.

ສ່ວນດ້ານບຸກຄະລາກອນແມ່ນ:

1. ພັດທະນາ ແລະ ຝຶກອົບຮົມພະນັກງານໃນການນຳໃຊ້ມາດຕະຖານລະບົບ **ISO 9001 Version 2015** ທີ່ປັບປຸງໃໝ່ ແລະ ທັກສະຄວາມຮູ້ສິນຄ້າຢ່າງເປັນລະບົບ.
2. ຈັດຫຼັກສູນຝຶກອົບຮົມທັກສະຕ່າງໆ ທັງການຝຶກອົບຮົບພາຍໃນ ແລະ ພາຍນອກ ຢ່າງເປັນລະບົບ ແລະ ຈັດອັນດັບຄວາມສາມາດຂອງພະນັກງານ ເພື່ອເພີ່ມສັກກະຍະພາບຂອງພະນັກງານເອງ ເພີ່ມຄວາມກ້າວໜ້າໃຫ້ພະນັກງານ ໃນການມີຕຳແໜ່ງຄວາມຮັບຜິດຊອບທີ່ສູງຂຶ້ນ
3. ປັບປຸງໂຄງສ້າງອົງກອນໃຫ້ມີຄວາມສອດຄ່ອງກັບການປ່ຽນແປງຂອງຮູບແບບທຸລະກິດ ແລະ ການປ່ຽນແປງພຶດຕິກຳຂອງລູກຄ້າ ພັດທະນາພະນັກງານໃຫ້ມີຄວາມເຂົ້າໃຈການປະສານງານຕາມໂຄງສ້າງໃໝ່ ຕາມການປ່ຽນແປງຂອງກຸ່ມລູກຄ້າໃນຕະຫລາດ,

ດ້ານການລົງທຶນ ແລະ ຂະຫຍາຍກິດຈະການແມ່ນໄດ້ວາງແຜນດັ່ງນີ້:

1. ຂະຫຍາຍສາຂາໃໝ່ ຈຳນວນ 4 ສາຂາ ເລີ້ມແຕ່ປີ 2022 ຫາ ປີ 2025.

ອີງຕາມກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ກຳນົດໃຫ້ແຜນການດຳເນີນທຸລະກິດຂອງບໍລິສັດຕ້ອງໄດ້ຖືກຮັບຮອງໂດຍກອງປະຊຸມຜູ້ຖືຮຸ້ນ ລາຍລະອຽດຕາມເອກະສານປະກອບໃນວາລະທີ 3 ລວມທັງບໍລິສັດໄດ້ເຜີຍແຜ່ແຜນການດຳເນີນທຸລະກິດດັ່ງກ່າວ ລົງໃນເວັບໄຊ ຂອງບໍລິສັດ ແລະ ເວັບໄຊຂອງຕະຫຼາດຫຼັກຊັບລາວນຳ.

ທັງນີ້, ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາແຜນການດຳເນີນທຸລະກິດ ປະຈຳປີ 2023.

ຫຼັງຈາກຜູ້ອໍານວຍການໃຫຍ່ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ **3** ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບ ຄໍາຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄໍາຖາມ ສາມາດຖາມໄດ້.

- ບໍ່ມີຄໍາຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາແຜນການດໍາເນີນທຸລະກິດຂອງບໍລິສັດປະຈໍາປີ 2023 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈໍານວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈໍານວນ **152.819.600** ສຽງເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ:</u>** ເຫັນດີ ແລະ ຮັບຮອງເອົາແຜນການດໍາເນີນທຸລະກິດຂອງບໍລິສັດປະຈໍາປີ 2023.

**<u>ວາລະທີ 4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດໍາເນີນທຸລະກິດ ປະຈໍາປີ 2022.</u>**

ປະທານສະພາບໍລິຫານໄດ້ແຈ້ງໃຫ້ກອງປະຊຸມຊາບວ່າ ຈາກບົດລາຍງານຜົນການດໍາເນີນທຸລະກິດຂອງບໍລິສັດປະຈໍາປີ **2022** ແລະ ບົດລາຍງານການເງິນຂອງບໍລິສັດປະຈໍາປີ **2022** ເຊິ່ງກອງປະຊຸມຜູ້ຖືຮຸ້ນໄດ້ຮັບຮອງໃນວາລະທີ **2** ແລ້ວລາຍລະອຽດຫຼັກແມ່ນເປັນໄປຕາມທີ່ **ທ່ານ ພົນໂນລາ ສຸຄະບັນດິດ** ຮອງຜູ້ອໍານວຍການໃຫຍ່, ຜູ້ອໍານວຍການຝ່າຍການເງິນ ເປັນຜູ້ລາຍງານດັ່ງຕໍ່ໄປນີ້: ເຫັນໄດ້ວ່າໃນປີ **2022** ທີ່ຜ່ານມາ ບໍລິສັດມີກໍາໄລສຸດທິຈາກຜົນການດໍາເນີນທຸລະກິດຈໍານວນ **56.611.713.277** ກີບ ເມື່ອຫັກຄັງສໍາຮອງຕາມກົດໝາຍ **10** ສ່ວນຮ້ອຍ ແລະ ຄັງສໍາຮອງສະສົມອື່ນໆ **10** ສ່ວນຮ້ອຍ ລວມທັງໝົດຈໍານວນ **20** ສ່ວນຮ້ອຍຂອງກໍາໄລສຸດທິແລ້ວ ເຫຼືອຈໍານວນ **45.289.370.622** ກີບ, ຈຶ່ງສະເໜີໃຫ້ມີການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີ ປິດປຶ້ມບັນຊີຜູ້ຖືຮຸ້ນ ແມ່ນວັນທີ **1** ມີນາ **2023** ໃນອັດຕາ **100** ກີບຕໍ່ຮຸ້ນ ລວມເປັນເງິນປັນຜົນຕ້ອງຈ່າຍທັງໝົດ **16.500.000.000** ກີບ ຄິດໄລ່ແລ້ວແມ່ນ **36** ສ່ວນຮ້ອຍ ຂອງກໍາໄລສຸດທິພາຍຫຼັງຫັກຄັງສໍາຮອງຕາມລະກົດໝາຍ ແລະ ຄັງສໍາຮອງສະສົມອື່ນໆໂດຍກໍານົດວັນຈ່າຍເງິນປັນຜົນແມ່ນວັນທີ **03** ພຶດສະພາ **2023**.

ຫຼັງຈາກ **ທ່ານ ພົນໂນລາ ສຸຄະບັນດິດ** ຮອງຜູ້ອໍານວຍການໃຫຍ່ ຜູ້ອໍານວຍການຝ່າຍການເງິນ ໄດ້ກ່າວລາຍງານແລ້ວ ຈຶ່ງໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄໍາຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄໍາຖາມ ສາມາດຖາມໄດ້.

- ບໍ່ມີຄໍາຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດໍາເນີນທຸລະກິດຂອງບໍລິສັດປະຈໍາປີ **2023** ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 152.819.600 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິ:** ອະນຸມັດໃຫ້ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປື້ມບັນຊີຜູ້ຖືຮຸ້ນໃນວັນທີປິດປື້ມບັນຊີຜູ້ຖືຮຸ້ນ ແມ່ນວັນທີ 01 ມີນາ 2023 ໃນອັດຕາ 100 ກີບຕໍ່ຮຸ້ນ ລວມເປັນເງິນປັນຜົນຕ້ອງຈ່າຍທັງໝົດ 16.500.000.000 ກີບ ຄິດໄລ່ແລ້ວແມ່ນ 36 ສ່ວນຮ້ອຍຂອງກຳໄລສຸດທິພາຍຫຼັງຫັກຄັງສຳຮອງຕາມກົດໝາຍ ແລະ ຄັງສຳຮອງສະສົມອື່ນໆ ໂດຍກຳນົດວັນຈ່າຍເງິນປັນຜົນແມ່ນ ວັນທີ 03 ພຶດສະພາ 2023.

**ວາລະທີ 5. ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2023.**

ປະທານສະພາບໍລິຫານໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ແລະ ແຈ້ງການຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດໃຫ້ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີຜູ້ກວດສອບບັນຊີພາຍນອກ ໂດຍຕ້ອງເປັນຜູ້ກວດສອບທີ່ໄດ້ຮັບການຮັບຮອງຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເຊິ່ງຜ່ານການເຫັນດີຂອງກອງປະຊຸມສະພາບໍລິຫານ, ຈຶ່ງສະເໜີໃຫ້ ບໍລິສັດ ພຣາຍສ໌ວໍເຕີ້ເຮົາສ໌ກູເປີ້ສ໌ (ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Co., Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ສະເພາະປະຈຳປີ 2023 ໂດຍມີຄ່າບໍລິການເປັນເງິນຈຳນວນບໍ່ກາຍ 36.500 ໂດລາສະຫະລັດ. ເນື່ອງຈາກ, ບໍລິສັດ ພຣາຍສ໌ວໍເຕີ້ເຮົາສ໌ກູເປີ້ສ໌ (ລາວ) ຈຳກັດຜູ້ດຽວ ແມ່ນເປັນຜູ້ກວດສອບບັນຊີໃຫ້ກັບບໍລິສັດມາແຕ່ການປະກາດຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ, ມີປະສົບການ, ມີຄວາມລະອຽດຮອບຄອບ, ມີຄວາມຊື່ສັດສຸດຈະລິດໃນໜ້າທີ່ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ ໃນສ່ວນຂອງຄ່າບໍລິການນັ້ນ ກໍ່ເປັນຈຳນວນ ທີ່ເໝາະສົມກັບວຽກງານໃນການກວດກາບັນຊີຂອງບໍລິສັດ ເຊິ່ງມີຈຳນວນຫຼວງຫຼາຍ ແລະ ເພື່ອໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ກວດສອບໄດ້ ຈຶ່ງມີຄວາມຈຳເປັນຕ້ອງນຳໃຊ້ບຸກຄະລາກອນທີ່ມີຄວາມຊ່ຽວຊານ ໂດຍບາງທ່ານກໍເປັນບຸກຄະລາກອນຈາກຕ່າງປະເທດນຳ.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານແລ້ວ ຈຶ່ງໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າບໍລິການຂອງຜູ້ກວດສອບບັນຊີພາຍນອກ ສະເພາະປະຈຳປີ 2023 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **152.819.600** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ:</u>** ອະນຸມັດໃຫ້ແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) ຈຳກັດຜູ້ດຽວ(PriceWaterHouseCoopers (Lao) Sole Co., Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ສະເພາະປະຈຳປີ 2023 ໂດຍມີຄ່າບໍລິການເປັນເງິນຈຳນວນ ບໍ່ກາຍ **36.500** ໂດລາສະຫະລັດ.

**<u>ວາລະທີ 6. ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານ ແທນສະມາຊິກສະພາບໍລິຫານທີ່ຄົບວາລະ;</u>**

ປະທານໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ເນື່ອງຈາກສະມາຊິກສະພາບໍລິຫານຂອງ ບໍລິສັດ ຈຳນວນ 9 ທ່ານ ໄດ້ແກ່:

1. ທ່ານ ສົມຈິດ ອິນທະມິດ
2. ທ່ານ ຣສ.ປອ ໄຊພອນ ກອງມະນີລາ
3. ທ່ານ ວັດດານາ ສຸຄະບັນດິດ
4. ທ່ານ ບຸນເຕີມ ກົມມິດຕະພາບ
5. ທ່ານ ພັນໂນລາ ສຸຄະບັນດິດ
6. ທ່ານ ກົດສະດາ ສຸຄະບັນດິດ
7. ທ່ານ ນາງ ຄຳໄຂ ລໍວັນໄຊ
8. ທ່ານ ນາງ ຊຸຕິການ ສີແສງຈັນ
9. ທ່ານ ພິພົບ ວາດສະໜາອາຊາສະກຸນ

ເຊິ່ງໃນປະຈຸບັນສະມາຊິກສະພາບໍລິຫານທຸກທ່ານໄດ້ປະຕິບັດໜ້າທີ່ຕ່າງໆຂອງບໍລິສັດຄົບອາຍຸການຕາມກົດໝາຍວ່າດ້ວຍວິສາຫະກິດຄື 2 ປີ ແລ້ວ ຈຳເປັນຈະຕ້ອງມີການເລືອກຕັ້ງສະມາຊິກສະພາບໍລິຫານ ເພື່ອປະຕິບັດໜ້າທີ່ໃນນາມຂອງບໍລິສັດຕໍ່ໄປ ໂດຍໄດ້ມີການແຈ້ງໃຫ້ແກ່ຜູ້ຖືຮຸ້ນທຸກທ່ານຮັບຊາບ ແລະ ເປີດໂອກາດໃຫ້ຜູ້ຖືຮຸ້ນ ທີ່ຖືຮຸ້ນລວມກັນທັງໝົດຕັ້ງແຕ່ຫ້າສ່ວນຮ້ອຍຂຶ້ນໄປມີສິດສະເໜີຊື່ເປັນສະມາຊິກສະພາບໍລິຫານຊຸດໃໝ່ ກ່ອນໜ້ານີ້ແລ້ວ ໃນວັນທີ 25 ມັງກອນ 2023 ແຕ່ບໍ່ມີຜູ້ຖືຮຸ້ນ ຫຼື ກຸ່ມຜູ້ຖືຮຸ້ນໃດສະເໜີເທື່ອ ຈຶ່ງສະເໜີໃຫ້ກອງປະຊຸມສະພາບໍລິຫານສະເໜີຊື່ບຸກຄົນເພື່ອປະຕິບັດໜ້າທີ່ເປັນສະມາຊິກສະພາບໍລິຫານ ຂອງບໍລິສັດ ຫຼື ຫາກບໍ່ມີຜູ້ໃດສະເໜີ, ຂໍສະເໜີໃຫ້ເລືອກຕັ້ງບັນດາສະມາຊິກສະພາບໍລິຫານຊຸດເກົ່າຄືນໃໝ່.

ເມື່ອບໍ່ມີຜູ້ໃດສະເໜີ, ຈຶ່ງຂໍໃຫ້ກອງປະຊຸມເລືອກຕັ້ງບັນດາສະມາຊິກສະພາບໍລິຫານຊຸດເກົ່າຄືນໃໝ່ ຕາມວາລະດັ່ງຕໍ່ໄປນີ້:

**<u>ວາລະທີ 6.1 ພິຈາລະນາການແຕ່ງຕັ້ງ ທ່ານ ຣສ.ປອ ໄຊພອນ ກອງມະນີລາ ເປັນຮອງປະທານສະພາບໍລິຫານຊຸດໃໝ່ຂອງບໍລິສັດ;</u>**

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ **ທ່ານ ຣສ.ປອ ໄຊພອນ ກອງມະນີລາ** ລາຍລະອຽດຕາມເອກະສານປະກອບ

ການພິຈາລະນາວາລະທີ 6.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ **ທ່ານ ຮສ.ປອ ໄຊພອນ ກອງມະນີລາ** ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ຮສ.ປອ ໄຊພອນ ກອງມະນີລາ** ເປັນຮອງປະທານສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **152.819.600** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ</u>**: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ຮສ.ປອ ໄຊພອນ ກອງມະນີລາ** ເປັນຮອງປະທານສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

**<u>ວາລະທີ 6.2 ພິຈາລະນາການແຕ່ງຕັ້ງ ທ່ານ ອັດດານາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ;</u>**

ເນື່ອງຈາກ **ທ່ານ ອັດດານາ ສຸຄະບັນດິດ** ແມ່ນເປັນຜູ້ອຳນວຍການໃຫ່ຍ ແລະ ເປັນຜູ້ຖືຮຸ້ນໃນວາລະນີ້ຈຶ່ງຖືວ່າເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາດັ່ງກ່າວນີ້ ຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳແລະ ໂປ່ງໃສ ຈຶ່ງຂໍຕັດຄະແນນສຽງຂອງ **ທ່ານ ອັດດານາ ສຸຄະບັນດິດ** ອອກໃນການລົງຄະແນນສຽງໃນວາລະນີ້.

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ **ທ່ານ ອັດດານາ ສຸຄະບັນດິດ** ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ **ທ່ານ ອັດດານາ ສຸຄະບັນດິດ** ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ອັດດານາ ສຸຄະບັນດິດ**

ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **124.295.160** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ</u>**: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ອັດດານາ ສຸຄະບັນດິດ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

### <u>ວາລະທີ 6.3 ພິຈາລະນາການແຕ່ງຕັ້ງ ທ່ານ ບຸນເຕີມ ກິມມິດຕະພາບ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ;</u>

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ **ທ່ານ ບຸນເຕີມ ກິມມິດຕະພາບ** ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ **ທ່ານ ບຸນເຕີມ ກິມມິດຕະພາບ** ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ບຸນເຕີມ ກິມມິດຕະພາບ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **152.819.600** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ</u>**: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ບຸນເຕີມ ກິມມິດຕະພາບ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

### <u>ວາລະທີ 6.4 ພິຈາລະນາການແຕ່ງຕັ້ງ ທ່ານ ພັນໂນລາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານຊຸດໃໝ່ ຂອງບໍລິສັດ</u>

ເນື່ອງຈາກ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາດັ່ງກ່າວນີ້ ຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກ

ຈຳກັດສິດໃນການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍຕັດຄະແນນສຽງຂອງ **ທ່ານ ພັນໂນລາ ສຸຄະບັນດິດ** ອອກໃນການລົງຄະແນນສຽງໃນວາລະນີ້.

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ **ທ່ານ ພັນໂນລາ ສຸຄະບັນດິດ** ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ **ທ່ານ ພັນໂນລາ ສຸຄະບັນດິດ** ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **125.975.020** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ</u>**: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ພັນໂນລາ ສຸຄະບັນດິດ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

**<u>ວາລະທີ 6.5 ພິຈາລະນາການແຕ່ງຕັ້ງ ທ່ານ ກິດສະດາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານຊຸດໃໝ່ ຂອງບໍລິສັດ;</u>**

ເນື່ອງຈາກ **ທ່ານ ກິດສະດາ ສຸຄະບັນດິດ** ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາດັ່ງກ່າວນີ້ ຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍຕັດຄະແນນສຽງຂອງ **ທ່ານ ກິດສະດາ ສຸຄະບັນດິດ** ອອກໃນການລົງຄະແນນສຽງໃນວາລະນີ້.

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ **ທ່ານ ກິດສະດາ ສຸຄະບັນດິດ** ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ **ທ່ານ ກິດສະດາ ສຸຄະບັນດິດ** ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ກິດສະດາ ສຸຄະບັນດິດ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **125.975.020** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ</u>**: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ກິດສະດາ ສຸຄະບັນດິດ**ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

**<u>ວາລະທີ 6.6 ພິຈາລະນາການແຕ່ງຕັ້ງ ທ່ານ ນາງ ຄຳໄຂ ລໍວັນໄຊ ເປັນສະມາຊິກສະພາບໍລິຫານຊຸດໃໝ່ ຂອງບໍລິສັດ;</u>**
ເນື່ອງຈາກ **ທ່ານ ນາງ ຄຳໄຂ ລໍວັນໄຊ** ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາດັ່ງກ່າວນີ້ ຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍຕັດຄະແນນສຽງຂອງ **ທ່ານ ນາງ ຄຳໄຂ ລໍວັນໄຊ** ອອກໃນການລົງຄະແນນສຽງໃນວາລະນີ້.

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ **ທ່ານ ນາງ ຄຳໄຂ ລໍວັນໄຊ** ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ **ທ່ານ ນາງ ຄຳໄຂ ລໍວັນໄຊ** ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ນາງ ຄຳໄຂ ລໍວັນໄຊ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **152.817.700** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ</u>**: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ນາງ ຄຳໄຂ ລໍວັນໄຊ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

**<u>ວາລະທີ 6.7 ພິຈາລະນາການແຕ່ງຕັ້ງ ທ່ານ ນາງ ຊຸຕິການ ສີແສງຈັນ ເປັນສະມາຊິກສະພາບໍລິຫານຊຸດໃໝ່ ຂອງ ບໍລິສັດ</u>**

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ **ທ່ານ ນາງ ຊຸຕິການ ສີແສງຈັນ** ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ **ທ່ານ ນາງ ຊຸຕິການ ສີແສງຈັນ** ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ນາງ ຊຸຕິການ ສີແສງຈັນ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **152.819.600** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ</u>**: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ນາງ ຊຸຕິການ ສີແສງຈັນ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

**<u>ວາລະທີ 6.8 ພິຈາລະນາການແຕ່ງຕັ້ງ ທ່ານ ພິພົບ ວາດສະໜາອາຊາສະກຸນ ເປັນສະມາຊິກສະພາບໍລິຫານຊຸດໃໝ່ ຂອງ ບໍລິສັດ</u>**

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ **ທ່ານ ພິພົບ ວາດສະໜາອາຊາສະກຸນ** ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ **ທ່ານ ພິພົບ ວາດສະໜາອາຊາສະກຸນ** ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ພິພົບ ວາດສະໜາອາຊາສະກຸນ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **152.819.600** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ</u>**: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ພິພົບ ວາດສະໜາອາຊາສະກຸນ** ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

**<u>ວາລະທີ 6.9 ພິຈາລະນາການແຕ່ງຕັ້ງ ທ່ານ ສົມຈິດ ອິນທະມິດ ເປັນປະທານສະພາບໍລິຫານຊຸດໃໝ່ຂອງບໍລິສັດ</u>**

ເນື່ອງຈາກວ່າ **ທ່ານ ສົມຈິດ ອິນທະມິດ** ເປັນປະທານໃນກອງປະຊຸມ ແລະ ເພື່ອໃຫ້ກອງປະຊຸມດຳເນີນໄປໂດຍຍຸຕິທຳ ແລະ ໂປ່ງໃສ ດັ່ງນັ້ນໃນການພິຈາລະນາວາລະນີ້ຈຶ່ງຂໍໃຫ້ **ທ່ານ ວັດດານາ ສຸຄະບັນດິດ** ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ ເປັນຜູ້ດຳເນີນກອງປະຊຸມຕໍ່ໄປ.

ຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ໄດ້ອ່ານປະຫວັດໂດຍຫຍໍ້ຂອງ **ທ່ານ ສົມຈິດ ອິນທະມິດ** ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກຜູ້ອຳນວຍການໃຫຍ່ຂອງບໍລິສັດໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ **ທ່ານ ສົມຈິດ ອິນທະມິດ** ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ຮອງປະທານສະພາບໍລິຫານຂອງ ບໍລິສັດ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ສົມຈິດ ອິນທະມິດ** ເປັນປະທານ ສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ **0** ສຽງ ເທົ່າກັບ **0** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **152.819.600** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ</u>**: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ ສົມຈິດ ອິນທະມິດ** ເປັນປະທານສະພາບໍລິຫານຊຸດໃໝ່ຂອງບໍລິສັດ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

**<u>ວາລະທີ 7. ພິຈາລະນາ ແລະ ອະນຸມັດໃຫ້ບໍລິສັດອອກຈຳໜ່າຍຮຸ້ນກູ້ ເພື່ອນຳໃຊ້ໃນການດຳເນີນທຸລະກິດ ຂອງບໍລິສັດ ໃນວົງເງິນບໍ່ເກີນ 120 ລ້ານບາດໄທ ຫຼື ທຽບເທົ່າສະກຸນເງິນໂດລາສະຫະລັດ.</u>**

ປະທານໄດ້ລາຍງານໃຫ້ກອງປະຊຸມຊາບວ່າ ເພື່ອໃຫ້ບໍລິສັດມີເງິນທຶນໃນການດຳເນີນທຸລະກິດ ຫຼື ຊຳລະຄືນເງິນກູ້ຂອງສະຖາບັນການເງິນ ຫຼື ໃຊ້ໃນການລົງທຶນຂະຫຍາຍສາຂາ ຫຼື ໃຊ້ເປັນທຶນໝູນວຽນຂອງບໍລິສັດ ດັ່ງນັ້ນ, ຈຶ່ງຂໍສະເໜີໃຫ້

ກອງປະຊຸມພິຈາລະນາ ແລະ ອະນຸມັດໃຫ້ບໍລິສັດອອກຈຳໜ່າຍຮຸ້ນກູ້ ໃນວົງເງິນບໍ່ເກີນ **120** ລ້ານບາດໄທ ຫຼື ທຽບເທົ່າໃນສະກຸນເງິນໂດລາສະຫະລັດ ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. **<u>ຈຳນວນວົງເງິນ</u>**: ຈຳນວນວົງເງິນອອກຮຸ້ນກູ້ບໍ່ເກີນ **120** ລ້ານບາດໄທ ຫຼື ທຽບເທົ່າໃນສະກຸນເງິນໂດລາສະຫະລັດ;
2. **<u>ຈຸດປະສົງ:</u>** ເພື່ອໃຊ້ສຳລັບເປົ້າໝາຍໃດໜຶ່ງ ຫຼື ຫຼາຍຢ່າງລວມກັນເຊັ່ນ: ຊຳລະຄືນເງິນກູ້ ຂອງສະຖາບັນການເງິນ ຫຼື ໃຊ້ໃນການລົງທຶນຂະຫຍາຍສາຂາ ຫຼື ໃຊ້ເປັນທຶນໝູນວຽນຂອງບໍລິສັດ;
3. **<u>ສະກຸນເງິນ:</u>** ໃນການອອກຈຳໜ່າຍຮຸ້ນກູ້ ດ້ວຍສະກຸນເງິນບາດໄທ ຫຼື ໂດລາສະຫະລັດ;
4. **<u>ອັດຕາດອກເບ້ຍ:</u>** ອັດຕາດອກເບ້ຍຂຶ້ນຢູ່ກັບຜົນການຈັດລຳດັບຄວາມໜ້າເຊື່ອຖື ຂອງບໍລິສັດ ຫຼື ຜົນການປຽບທຽບອັດຕາດອກເບ້ຍ ລະຫວ່າງ ພັນທະບັດລັດຖະບານ ຫຼື ອັດຕາດອກເບ້ຍເງິນຝາກທະນາຄານ ແລະ ສະພາບຕະຫລາດໃນຂະນະທີ່ ສະເໜີຂາຍຮຸ້ນກູ້;
5. **<u>ອາຍຸຂອງຮຸ້ນກູ້:</u>** ຕາມແຜນການນຳໃຊ້ທຶນ ຫຼື ສະພາບຂອງຕະຫຼາດໃນຊ່ວງໄລຍະເວລາ ທີ່ສະເໜີອອກຈຳໜ່າຍຮຸ້ນກູ້ ແລະ ອາຍຸຂອງຮຸ້ນກູ້ບໍ່ເກີນ 7 ປີ;
6. **<u>ວິທີການສະເໜີຂາຍ:</u>** ບໍລິສັດ ສາມາດອອກ ແລະ ຈຳໜ່າຍຮຸ້ນກູ້ທັງໝົດ ຫຼື ບາງສ່ວນ, ໃນຄັ້ງດຽວເຕັມຈຳນວນ ຫຼື ຫຼາຍຄັ້ງ, ເປັນຊຸດດຽວ ຫລື ຫຼາຍຊຸດ ຕາມຄວາມຈຳເປັນໃນການໃຊ້ເງິນ ຂອງບໍລິສັດ ເຊິ່ງຈະສະເໜີອອກຈຳໜ່າຍ ໃນຕະຫລາດ ສປປ ລາວ, ໂດຍຜ່ານຮູບແບບການອອກຈຳໜ່າຍ ໃນວົງຈຳກັດ (Private Placement), ໂດຍສະເໜີຂາຍໃຫ້ແກ່ສະຖາບັນການເງິນ ຫຼື ຜູ້ລົງທຶນລາຍໃຫຍ່ ໂດຍປະຕິບັດຕາມກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງ ແລະ ມີຜົນບັງຄັບໃຊ້ໃນໄລຍະເວລາ ທີ່ສະເໜີອອກຈຳໜ່າຍຮຸ້ນກູ້;
7. **<u>ການມອບສິດອຳນາດ:</u>** ສະເໜີກອງປະຊຸມສະພາບໍລິຫານມອບອຳນາດໃຫ້ ຄະນະຜູ້ບໍລິຫານ ຂອງບໍລິສັດ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການພິຈາລະນາ ແລະ ດຳເນີນວຽກງານ ກ່ຽວກັບ ການອອກຈຳໜ່າຍຮຸ້ນກູ້ ມີລາຍລະອຽດດັ່ງຕໍ່ໄປນີ້:

- ພິຈາລະນາ ແລະ ກຳນົດວົງເງິນ ທີ່ຈະອອກຈຳໜ່າຍຮຸ້ນກູ້ ລາຍລະອຽດທີ່ກ່ຽວຂ້ອງເຊັ່ນ: ຂໍ້ກຳນົດ ແລະ ເງື່ອນໄຂ, ອາຍຸຂອງຮຸ້ນກູ້, ມູນຄ່າອອກຈຳໜ່າຍຮຸ້ນກູ້, ອັດຕາດອກເບ້ຍ, ສະກຸນເງິນ, ໄລຍະເວລາໃນການອອກ ແລະ ສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ, ລາຍລະອຽດການສະເໜີຂາຍ;
- ການເປີດເຜີຍຂໍ້ມູນ, ຕິດຕໍ່, ການໃຫ້ຂໍ້ຄວາມ, ການໃຫ້ຂໍ້ມູນ, ດັດແກ້, ເພີ່ມເຕີມ, ເຈລະຈາ, ຕົກລົງ, ລົງນາມ , ການສົ່ງມອບຄຳຮ້ອງຕ່າງໆ, ສັນຍາ ຫຼື ເອກະສານຕ່າງໆ ທີ່ຈຳເປັນ ແລະ ກ່ຽວຂ້ອງ ກັບການອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ບັນດາໜ່ວຍງານຕ່າງໆ ລວມມີແຕ່ບໍ່ຈຳກັດພຽງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ທະນາຄານແຫ່ງ ສປປ ລາວ ຫຼື ອົງການຂອງລັດ ຫຼື ນິຕິບຸກຄົນ ຫຼື ບຸກຄົນໃດ ທີ່ກ່ຽວຂ້ອງ;
- ຄັດເລືອກ, ແຕ່ງຕັ້ງ, ຖອດຖອນ ບໍລິສັດທີ່ປຶກສາ, ຜູ້ຈັດຈຳໜ່າຍຫຼັກຊັບ, ຜູ້ຄໍ້າປະກັນການອອກຈຳໜ່າຍຫຼັກຊັບ, ຕົວແທນ, ທີ່ປຶກສາ, ຕົວແທນຜູ້ຖືຮຸ້ນກູ້, ຕົວແທນຜູ້ອອກຮຸ້ນກູ້, ນາຍທະບຽນ ແລະ ຕົວແທນຊຳລະ ຫຼື ບຸກຄົນອື່ນໆ ທີ່ຈຳເປັນໃຫ້ແກ່ການດຳເນີນທຸລະກຳຈົນສຳເລັດ;

- ເປີດບັນຊີທະນາຄານ ທີ່ກ່ຽວຂ້ອງກັບທຸລະກຳການອອກຈຳໜ່າຍຮຸ້ນກູ້ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ປະຕິບັດ ແລະ ດຳເນີນງານວຽກງານອື່ນໆ ທີ່ຈຳເປັນ ແລະ ກ່ຽວຂ້ອງໄດ້ທຸກປະການ ເພື່ອໃຫ້ສຳເລັດທຸລະກຳດັ່ງກ່າວ,ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ຫຼື ຖອດຖອນ ຜູ້ຮັບມອບອຳນາດໃນການດຳເນີນການໃດ ໜຶ່ງ ດັ່ງກ່າວຂ້າງເທິງນີ້.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານແລ້ວ ຈຶ່ງໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

❖ ຄຳຖາມຈາກ **ທ່ານ ນາງ ຈັນເພັດ ຫຼວງບັນດິດ ຜູ້ຖືຮຸ້ນ :** ຈາກການລາຍງານການຂໍອອກຮຸ້ນກູ້ໃນຄັ້ງນີ້ໄດ້ກຳນົດອັດຕາດອກເບ້ຍໄວ້ທີ່ເທົ່າໃດ, ໄລຍະເວລາການອອກຮຸ້ນກູ້ແມ່ນກຳນົດໄລຍະເວລາຈັກປີ ແລະ ນຳໄປໃຊ້ເຮັດຫຍັງແດ່?

- **ທ່ານ ພັນໂນລາ ສຸຄະບັນດິດ** ຮອງຜູ້ອຳນວຍການໃຫ່ຍ ຜູ້ອຳນວຍການຝ່າຍການເງິນ: ສະແດງຄວາມຂອບໃຈຕໍ່ກັບຄຳຖາມຂອງ **ທ່ານ ນາງ ຈັນເພັດ ຫຼວງບັນດິດ** ກ່ຽວກັບການອອກຮຸ້ນກູ້ ການອອກຮຸ້ນກູ້ແມ່ນຖືກອະນຸມັດໃນຈຳນວນເງິນ 120 ລ້ານບາດໄທ ຫຼື ທຽບເທົ່າໃນສະກຸນເງິນໂດລາສະຫະລັດ ໃນປະຈຸບັນ ເມື່ອທຽບໃສ່ພັນທະບັດລັດທະບານ, ອັດຕາດອກເບ້ຍທະນາຄານ ແລະ ສະຖາບັນການເງິນ ແລ້ວ ເຫັນວ່າປະຈຸບັນຂ້ອນຂ້າງຈະສູງສົມຄວນສຳລັບຕົວເລກດັ່ງກ່າວແມ່ນຢູ່ຂັ້ນຕອນການພິຈາລະນາຮ່ວມກັນກັບທີ່ປຶກສາ(FA)ຢູ່ ຄາດວ່າອັດຕາດອກເບ້ຍເບື້ອງຕົ້ນແມ່ນກຳນົດຢູ່ທີ່ລະຫວ່າງ 7,20 ຫາ 7,50 ສ່ວນຮ້ອຍ ຕໍ່ປີ, ກ່ຽວກັບອາຍຸຂອງຮຸ້ນກູ້ແມ່ນໄດ້ຄຳນວນເບື້ອງຕົ້ນຮ່ວມກັນກັບທີ່ປຶກສາ(FA)ແລ້ວຈະຢູ່ທີ່ປະມານ 4 ປີ, ພາຍຫຼັງທີ່ອອກຈຳໜ່າຍ ຮຸ້ນກູ້ ແລ້ວ ເງິນທີ່ໄດ້ມາດັ່ງກ່າວຈະໃຊ້ເຂົ້າໃນການຂະຫຍາຍສາຂາເປັນຫຼັກ ເປົ້າໝາຍຕາມແຜນແມ່ນຂະຫຍາຍຕື່ມອີກ 4 ສາຂາ ແຕ່ປີ 2022 ຫາປີ 2025 ໂດຍສະເພາະແມ່ນສາຂາ ສົມສະນຸກ ທີ່ຈະເລີ່ມກໍ່ສ້າງໃນໄວໆນີ້ແມ່ນຈຳເປັນຕ້ອງໄດ້ໃຊ້ເງິນດັ່ງກ່າວເຂົ້າໃນການດຳເນີນງານ.

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດໃຫ້ບໍລິສັດອອກຈຳໜ່າຍຮຸ້ນກູ້ ເພື່ອນຳໃຊ້ໃນການດຳເນີນທຸລະກິດ ຂອງບໍລິສັດ ໃນວົງເງິນບໍ່ເກີນ **120** ລ້ານບາດໄທ ຫຼື ທຽບເທົ່າໃນສະກຸນເງິນໂດລາສະຫະລັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ **152.819.600** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ມະຕິ:</u>** ອະນຸມັດໃຫ້ອອກຈຳໜ່າຍຮຸ້ນກູ້ໃນວົງເງິນບໍ່ເກີນ **120** ລ້ານບາດໄທ ຫຼື ທຽບເທົ່າໃນສະກຸນເງິນໂດລາສະຫະລັດ ລວມທັງການມອບອຳນາດໃຫ້ ຄະນະຜູ້ບໍລິຫານຂອງບໍລິສັດ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ

ເປັນຜູ້ມີອຳນາດໃນການພິຈາລະນາ ແລະ ດຳເນີນວຽກງານກ່ຽວກັບການອອກຈຳໜ່າຍຮຸ້ນກູ້ຈົນສຳເລັດ.

ນອກຈາກນີ້, ບໍ່ມີເລື່ອງໃຫ້ພິຈາລະນາ ປະທານ ຈຶ່ງກ່າວປິດກອງປະຊຸມໃນເວລາ 16:00 ໂມງ.

(ທ່ານ ສົມຈິດ ອິນທະມິດ)

ປະທານກອງປະຊຸມ

<u>ໄດ້ຮັບການກວດກາແລ້ວວ່າຖືກຕ້ອງ</u>

| | |
|---|---|
| (ທ່ານ ວັດດານາ ສຸຄະບັນດິດ) | (ທ່ານ ພັນໂນລາ ສຸຄະບັນດິດ) |
| ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ບໍລິສັດ | ສະມາຊິກສະພາບໍລິຫານ/ຜູ້ອຳນວຍການຝ່າຍການເງິນ |

ເອກະສານປະກອບວາລະທີ 2: ບົດລາຍງານການເງິນຂອງບໍລິສັດ ປະຈໍາປີ 2023

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານສະຖານະການເງິນ
ວັນທີ 31 ທັນວາ 2023

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ຊັບສິນ** | | | |
| **ຊັບສິນໝູນວຽນ** | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 5 | 97.622.510.973 | 38.288.451.914 |
| ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ | 6 | 5.564.004.643 | 6.217.863.819 |
| ເຄື່ອງໃນສາງ, ສຸດທິ | 7 | 484.347.770.402 | 402.463.937.243 |
| ຊັບສິນໝູນວຽນອື່ນໆ | 8 | 38.424.118.275 | 20.547.738.684 |
| **ລວມຊັບສິນໝູນວຽນ** | | **625.958.404.293** | **467.517.991.660** |
| **ຊັບສິນບໍ່ໝູນວຽນ** | | | |
| ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ | 9 | 1.171.299.214.767 | 904.691.252.324 |
| ຊັບສິນບໍ່ໝູນວຽນອື່ນໆ | 8 | 8.730.500.190 | 20.355.868.711 |
| ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ | 10 | 365.075.938 | 116.392.238 |
| **ລວມຊັບສິນບໍ່ໝູນວຽນ** | | **1.180.394.790.895** | **925.163.513.273** |
| **ລວມຊັບສິນ** | | **1.806.353.195.188** | **1.392.681.504.933** |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດານາ ສຸດຊະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໂນລາ ສຸດຊະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານສະຖານະການເງິນ
ວັນທີ 31 ທັນວາ 2023

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ໜີ້ສິນ** | | | |
| **ໜີ້ສິນໝູນວຽນ** | | | |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | 11 | 65.565.702.900 | 51.745.048.229 |
| ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ | 12 | 54.694.740.214 | 84.934.340.351 |
| ສ່ວນໝູນວຽນຂອງເງິນໃຫ້ກູ້ຢືມໄລຍະຍາວ | 12 | 26.353.809.980 | 20.671.002.986 |
| ໜີ້ຕ້ອງສົ່ງອາກອນກຳໄລ | 14 | 12.359.633.801 | 11.564.148.709 |
| ເງິນມັດຈຳຈາກລູກຄ້າ | 15 | 2.952.230.119 | 2.003.390.891 |
| ໜີ້ສິນໝູນວຽນອື່ນໆ | 16 | 19.538.533.683 | 14.345.115.421 |
| **ລວມໜີ້ສິນໝູນວຽນ** | | **181.464.650.697** | **185.263.046.587** |
| **ໜີ້ສິນບໍ່ໝູນວຽນ** | | | |
| ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ | 12 | 48.063.332.611 | 58.329.409.126 |
| ເງິນກູ້ຢືມໄລຍະຍາວຈາກຮຸ້ນກູ້ | 13 | 62.116.071.600 | - |
| **ລວມໜີ້ສິນບໍ່ໝູນວຽນ** | | **110.179.404.211** | **58.329.409.126** |
| **ລວມໜີ້ສິນ** | | **291.644.054.908** | **243.592.455.713** |
| **ທຶນ** | | | |
| ທຶນຈົດທະບຽນ | 17 | 330.000.000.000 | 330.000.000.000 |
| ສ່ວນເພີ່ມມູນຄ່າຮຸ້ນ | 17 | 24.735.724.722 | 24.735.724.722 |
| ກຳໄລສະສົມ | | | |
| ເງິນສຳຮອງຕາມກົດໝາຍ | 18 | 20.181.970.566 | 14.102.046.968 |
| ເງິນສຳຮອງອື່ນໆ | 18 | 19.931.970.566 | 13.852.046.968 |
| ກຳໄລລໍຖ້າແບ່ງປັນ | | 250.094.367.876 | 217.954.979.089 |
| ຜົດດ່ຽງຈາກການແປງຄ່າເອກະສານລາຍງານການເງິນ | | 869.765.106.550 | 548.444.251.473 |
| **ລວມທຶນ** | | **1.514.709.140.280** | **1.149.089.049.220** |
| **ລວມໜີ້ສິນ ແລະ ທຶນ** | | **1.806.353.195.188** | **1.392.681.504.933** |

ວັດດານາ ສຸດຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໄມລາ ສຸດຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

**ໃບລາຍງານຜົນໄດ້ຮັບ**
**ສຳລັບສິ້ນສຸດ ວັນທີ 31 ທັນວາ 2023**

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| ລາຍໄດ້ຈາກການຂາຍ | | 767.139.816.343 | 647.161.515.668 |
| ຕົ້ນທຶນໃນການຂາຍ | 19 | (577.868.541.221) | (485.502.857.955) |
| **ກຳໄລລວມຂັ້ນຕົ້ນ** | | **189.271.275.122** | **161.658.657.713** |
| ລາຍຮັບອື່ນໆ | | 3.775.988.159 | 2.561.646.580 |
| ລາຍຈ່າຍໃນການຂາຍ | 19 | (68.779.390.380) | (53.069.064.227) |
| ລາຍຈ່າຍບໍລິຫານ | 19 | (44.395.469.247) | (43.132.823.609) |
| ຕົ້ນທຶນການເງິນ | | (9.440.438.865) | (8.124.604.117) |
| ກຳໄລ / (ຂາດທຶນ) ຈາກອັດຕາແລກປ່ຽນ | | 1.160.130.886 | 6.662.858.647 |
| **ກຳໄລ ກ່ອນຈ່າຍອາກອນກຳໄລ** | | **71.592.095.675** | **66.556.670.987** |
| ລາຍຈ່າຍອາກອນກຳໄລ | 20 | (10.792.859.692) | (9.944.957.710) |
| **ກຳໄລສຸດທິ** | | **60.799.235.983** | **56.611.713.277** |
| **ກຳໄລຕໍ່ຮຸ້ນ** | | | |
| ກຳໄລພື້ນຖານຕໍ່ຮຸ້ນ | | 368 | 343 |

ອັດຖາມາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໄນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

**ໃບລາຍງານສ່ວນປ່ຽນແປງທຶນ**
**ສຳລັບສິ້ນສຸດ ວັນທີ 31 ທັນວາ 2023**

| | ບົດ ອະທິບາຍ | ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ | ສ່ວນເພີ່ມ ມູນຄ່າຮຸ້ນ ກີບ | ສຳຮອງເງິນ ຕາມກົດໝາຍ ກີບ | ສຳຮອງເງິນ ອື່ນໆ ກີບ | ກຳໄລສະສົມ ລໍຖ້າແບ່ງປັນ ກີບ | ຜົດດ່ຽງຈາກການແປງ ຄ່າເອກະສານລາຍ ງານການເງິນ ກີບ | ລວມ ກີບ |
|---|---|---|---|---|---|---|---|---|
| **ຍອດຍົກມາ ວັນທີ 1 ມັງກອນ 2022** | | 330.000.000.000 | 24.735.724.722 | 8.440.875.640 | 8.190.875.640 | 180.915.608.468 | 207.436.085.637 | 759.719.170.107 |
| ສຳຮອງເງິນຕາມກົດໝາຍ | | - | - | 5.661.171.328 | - | (5.661.171.328) | - | - |
| ສຳຮອງເງິນອື່ນໆ | | - | - | - | 5.661.171.328 | (5.661.171.328) | - | - |
| ກຳໄລສຸດທິໃນປີ | | - | - | - | - | 56.611.713.277 | - | 56.611.713.277 |
| ຈ່າຍເງິນປັນຜົນ | 21 | - | - | - | - | (8.250.000.000) | - | (8.250.000.000) |
| ຜົດດ່ຽງຈາກການແປງຄ່າເອກະສານລາຍງານການເງິນ | | - | - | - | - | - | 341.008.165.836 | 341.008.165.836 |
| **ຍອດເຫຼືອໃນວັນທີ 31 ທັນວາ 2022** | | **330.000.000.000** | **24.735.724.722** | **14.102.046.968** | **13.852.046.968** | **217.954.979.090** | **548.444.251.473** | **1.149.089.049.220** |
| **ຍອດຍົກມາ ວັນທີ 1 ມັງກອນ 2023** | | 330.000.000.000 | 24.735.724.722 | 14.102.046.968 | 13.852.046.968 | 217.954.979.089 | 548.444.251.473 | 1.149.089.049.220 |
| ສຳຮອງເງິນຕາມກົດໝາຍ | | - | - | 6.079.923.598 | - | (6.079.923.598) | - | - |
| ສຳຮອງເງິນອື່ນໆ | | - | - | - | 6.079.923.598 | (6.079.923.598) | - | - |
| ກຳໄລສຸດທິໃນປີ | | - | - | - | - | 60.799.235.983 | - | 60.799.235.983 |
| ຈ່າຍເງິນປັນຜົນ | 21 | - | - | - | - | (16.500.000.000) | - | (16.500.000.000) |
| ຜົດດ່ຽງຈາກການແປງຄ່າເອກະສານລາຍງານການເງິນ | | - | - | - | - | - | 321.320.855.077 | 321.320.855.077 |
| **ຍອດເຫຼືອໃນວັນທີ 31 ທັນວາ 2023** | | **330.000.000.000** | **24.735.724.722** | **20.181.970.566** | **19.931.970.566** | **250.094.367.876** | **869.765.106.550** | **1.514.709.140.280** |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດານາ ສຸດສະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໃນລາ ສຸດສະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

## ໃບລາຍງານ ກະແສເງິນສົດ
## ສຳລັບສິ້ນສຸດ ວັນທີ 31 ທັນວາ 2023

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:** | | | |
| ກຳໄລກ່ອນອາກອນກຳໄລສຳລັບປີ | | 71.592.095.675 | 66.556.670.987 |
| ການດັດແກ້: | | | |
| ຄ່າຫຼຸ້ຍຫ້ຽນ | 10 | 26.264.684.632 | 23.011.152.048 |
| ການຕັດຈ່າຍ | 11 | 276.619 | 6.694.689 |
| (ກຳໄລ) / ຂາດທຶນຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ | | 241.033.613 | (341.145.801) |
| ຂາດທຶນຈາກອັດຕາແລກປ່ຽນ | | 15.766.091.931 | 10.898.529.381 |
| ລາຍຈ່າຍດອກເບ້ຍ | | 7.288.621.421 | 8.124.604.117 |
| ສຳຮອງເງິນແຮເຄື່ອງໃນສາງ | | (1.968.627.461) | 1.507.680.606 |
| ສຳຮອງເງິນແຮໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ | | (1.839.104.424) | 3.660.182.750 |
| ສຳຮອງສຳລັບສິ່ງຄືນການຂາຍ | | 721.179.343 | 800.697.550 |
| ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນໝູນວຽນ | | 118.066.251.349 | 114.225.066.327 |
| ການປ່ຽນແປງຈາກ ການດຳເນີນງານຂອງຊັບສິນ ແລະ ໜີ້ສິນ | | | |
| - ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ | | 3.671.661.218 | 7.318.076.794 |
| - ເຄື່ອງໃນສາງ | | 30.992.773.852 | 12.438.560.104 |
| - ຊັບສິນໝູນວຽນອື່ນໆ | | 4.634.987.252 | (30.593.484.562) |
| - ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | (2.827.444.258) | (33.568.273.843) |
| - ເງິນມັດຈຳຈາກລູກຄ້າ | | 396.759.860 | (1.063.052.890) |
| - ໜີ້ສິນໝູນວຽນອື່ນໆ | | 1.198.248.403 | (6.949.828.997) |
| ກະແສເງິນສົດເພີ່ມຂຶ້ນຈາກການດຳເນີນງານ | | 156.133.237.676 | 61.807.062.933 |
| ຈ່າຍດອກເບ້ຍ | | (7.246.570.390) | (8.065.521.527) |
| ຈ່າຍອາກອນກຳໄລ | 15 | (10.944.957.710) | (3.951.260.210) |
| ເງິນສົດສຸດທິ ໄດ້ຈາກສຳລັບກິດຈະກຳ ການດຳເນີນງານ | | 137.941.709.576 | 49.790.281.196 |
| **ກະແສເງິນສົດ ຈາກກິດຈະກຳ ການລົງທຶນ:** | | | |
| ຊື້ອາຄານ ແລະ ອຸປະກອນ | | (45.475.264.153) | (14.489.151.307) |
| ຊື້ຊອບແວຄອມພິວເຕີ | | (216.925.978) | (63.068.285) |
| ຮັບເງິນຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ | | 245.388.000 | 550.065.950 |
| ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ | | (45.446.802.131) | (14.002.153.642) |

ວັດຕານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໄນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

**ໃບລາຍງານ ກະແສເງິນສົດ**
**ສໍາລັບສິ້ນສຸດ ວັນທີ 31 ທັນວາ 2023**

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກໍາການເງິນ:** | | | |
| ຮັບເງິນກູ້ຢືມຈາກທະນາຄານ | | 481.773.255.542 | 496.320.013.715 |
| ການຊໍາລະຄືນຂອງເງິນກູ້ຢືມຈາກທະນາຄານ | | (553.376.221.402) | (489.601.287.323) |
| ຮັບເງິນກູ້ຢືມຈາກຮຸ້ນກູ້ | 13 | 62.116.071.600 | - |
| ຈ່າຍເງິນປັນຜົນ | 21 | (16.500.000.000) | (8.250.000.000) |
| ເງິນສົດສຸດທິໃຊ້ໃນກິດຈະກໍາທາງການເງິນ | | (25.986.894.260) | (1.531.273.608) |
| **ເພີ່ມຂຶ້ນສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | 66.508.013.185 | 34.256.853.946 |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ | 5 | 38.288.451.914 | 3.285.274.048 |
| ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | (7.173.954.126) | 746.323.920 |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | **97.622.510.973** | **38.288.451.914** |
| | | | |
| **ລາຍການບໍ່ແມ່ນເງິນສົດທີ່ສໍາຄັນ** | | | |
| ໜີ້ຕ້ອງສົ່ງອື່ນໆຈາກການຊື້ອາຄານ ແລະ ອຸປະກອນ | | 2.388.588.400 | 789.048.267 |

ວັດດານາ ສຸຄະບັນດິດ
ຜູ້ອໍານວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໂນລາ ສຸຄະບັນດິດ
ຜູ້ອໍານວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

## ເອກະສານປະກອບວາລະທີ 3: ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024

### 1. ແຜນການສ້າງລາຍໄດ້ປະຈຳປີ 2024.

ໃນປີ 2024 ບໍລິສັດຕັ້ງເປົ້າໝາຍການເຕີບໂຕທີ 20% ເມື່ອທຽບກັບປີທີ່ຜ່ານມາ ໂດຍອີງໃສ່ການວິເຄາະປັດໄຈບວກເຊັ່ນ: ການເປີດປີທ່ອງທ່ຽວລາວ 2024, ການເປັນປະທານອາຊຽນ ຊຶ່ງຈະມີການຈັດກອງປະຊຸມ ແລະ ປັບປຸງໂຄງສ້າງພື້ນຖານຕ່າງໆຢ່າງຫຼວງຫຼາຍ, ການລົງທຶນຈາກຕ່າງປະເທດ ແລະ ການຜ່ອນຄາຍລົງຂອງພາວະໂລກລະບາດ ແລະ ປັດໄຈລົບເຊັ່ນ: ຄວາມຂັດແຍ່ງທາງດ້ານການເມືອງ ແລະ ການທະຫານໃນຫຼາຍຂົງເຂດທົ່ວໂລກ ໂດຍສະເພາະຂົງເຂດ ທີ່ກ່ຽວກັບພະລັງງານ ແລະ ການແບ່ງຂົ້ວທາງການເມືອງ ທີ່ນັບມື້ນັບຊັດເຈນຂຶ້ນ ແຕ່ຄາດວ່າບໍລິສັດຈະສາມາດຂະຫຍາຍຕົວໄດ້ດ້ວຍແນວທາງດັ່ງລຸ່ມນີ້:

**1.1** ປັບຖານສິນຄ້າທີ່ເປັນໝວດທີ່ສຳຄັນ ແລະ ສ້າງລາຍຮັບສູງ ໃຫ້ຕົງຕາມຄວາມຕ້ອງການຂອງລູກຄ້າຫຼາຍຂຶ້ນ;

**1.2** ທົບທວນເພີ່ມສິນຄ້າໃໝ່ ລວມທັງໂຟກັດສິນຄ້າຂາຍດີ ແລະ ຕັດສິນຄ້າເກົ່າທີ່ລ້າສະໄໝເປັນປະຈຳທຸກໄຕມາດ;

**1.3** ລົດຕົ້ນທຶນສິນຄ້າໂດຍການຫາແຫຼ່ງໂຮງງານ ທີ່ມີຟອມ D ແລະ E;

**1.4** ເພີ່ມການຂາຍຫຼາຍຊ່ອງທາງຂຶ້ນທັງ Offline ແລະ Online ແລະ ເພີ່ມການໃຫ້ຄວາມຮູ້ແກ່ຜູ້ມີອິດທິພົນໃນການຊື້ຫຼາຍຂຶ້ນ;

**1.5** ຂະຫຍາຍການຂາຍສິນຄ້າ ແລະ ບໍລິການໄປສູ່ຕະຫຼາດໃໝ່ ທີ່ຂະຫຍາຍສາຂາເພີ່ມຂຶ້ນ.

### 2. ແຜນການຕະຫຼາດປະຈຳປີ 2024.

**2.1** ສ້າງຄວາມຕ້ອງການ ແລະ ການຮັບຮູ້ Brand SOUVANNY ແລະ Brand ສິນຄ້າຫຼາຍຂຶ້ນການຜ່ານໂຄສະນາປະຊາສຳພັນທາງ Online ແລະ Offline;

**2.2** ສ້າງຄວາມສຳພັນກັບກຸ່ມທີ່ມີອິດທິພົນຕໍ່ການສັ່ງຊື້;

**2.3** ສ້າງໂຄງການຊ່ວຍເຫຼືອສັງຄົມຜ່ານໂຄງການ "ສ້າງຮອຍຍິ້ມ ດ້ວຍການແບ່ງປັນ" ຊ່ວຍເຫຼືອໂຮງຮຽນ, ໂຮງໝໍ, ການບໍລິຈາກເລືອດ, ອຸປະກອນກິລາ ແລະ ການສຶກສາ ໃນເຂດຫ່າງໄກສອກຫຼີກ ແລະ ຊ່ວຍບັນເທົາໄພພິບັດຕ່າງໆ;

**2.4** ສຳຫລວດຄວາມເພິ່ງພໍໃຈ ຂອງລູກຄ້າ ແລະ ສຶກສາຄວາມຕ້ອງການ ຂອງລູກຄ້າກຸ່ມເປົ້າໝາຍ ເພື່ອປັບປຸງແກ້ໄຂຂໍ້ບົກຜ່ອງ ແລະ ສົ່ງເສີມຈຸດແຂງ ຂອງບໍລິສັດໃຫ້ດີຂຶ້ນ;

**2.5** ສ້າງ Platform ແລະ ຈັດທຳສື່ໂຄສະນາຜ່ານທາງ Online ແລະ Offline ເພື່ອສື່ສານການຕະຫລາດໄປສູ່ກຸ່ມລູກຄ້າເປົ້າໝາຍໃນແຕ່ລະທ້ອງຖິ່ນ;

**2.6** ຈັດທຳໂປໂມຊັ່ນສິນຄ້າໄປສູ່ແຕ່ລະກຸ່ມລູກຄ້າເປົ້າໝາຍ ເພື່ອກະຕຸ້ນຍອດຂາຍ.

### 3. ແຜນການພັດທະນາມາດຕະຖານການຈັດການປະຈຳປີ 2024.

**3.1** ສືບຕໍ່ປັບປຸງມາດຕະຖານຮ້ານໃຫ້ມີມາດຕະຖານສູງຂຶ້ນ;

**3.2** ປັບປຸງມາດຕະຖານບໍລິການ ໃຫ້ຕອບໂຈດຄວາມຕ້ອງການຂອງລູກຄ້າຫຼາຍຂຶ້ນ;

**3.3** ສືບຕໍ່ປັບປຸງມາດຕະຖານ ISO 9001 VERSION-2015 ໃຫ້ໄດ້ມາດຕະຖານທີ່ສູງຂຶ້ນ.

4. **ແຜນການພັດທະນາດ້ານບຸກຄະລາກອນປະຈໍາປີ 2024.**

**4.1** ພັດທະນາຝຶກອົບຮົມພະນັກງານໃນທຸກລະດັບ ໂດຍການສັນຫາບຸກຄະລາກອນ ທີ່ມີຄວາມຊໍານານທັງພາຍໃນ ແລະ ພາຍນອກ ເພື່ອມາຊ່ວຍຍົກລະດັບພະນັກງານໃຫ້ມີຄວາມຮູ້ຄວາມສາມາດສູງຂຶ້ນ;

**4.2** ຈັດການສອບເສັງ ເພື່ອຄັດເລືອກພະນັກງານດີ ແລະ ເກັ່ງ ກຽມໄວ້ ເພື່ອຮອງຮັບການຂະຫຍາຍຕົວຂອງບໍລິສັດ;

**4.3** ສ້າງສະພາບແວດລ້ອມ ເພື່ອເຊື່ອມໂຍງການຮຽນຮູ້ແລກປ່ຽນບົດຮຽນກັບສະຖາບັນການສຶກສາ ແລະ ອົງກອນທີ່ມີຄວາມຊໍານານສະເພາະທາງ ທັງພາຍໃນ ແລະ ພາຍນອກ ເພື່ອເພີ່ມຂີດຄວາມສາມາດຂອງພະນັກງານໃນການຄົ້ນຄວ້າ, ວິໃຈ ຫາຄວາມໄດ້ປຽບຂອງທຸລະກິດໃນການແຂ່ງຂັນຖ້າມກາງຄວາມຕ້ອງການຂອງລູກຄ້າ ທີ່ມີການປ່ຽນແປງໄວຂຶ້ນ.

5. **ແຜນການລົງທຶນ ແລະ ຂະຫຍາຍກິດຈະການປະຈໍາປີ 2023**

**5.1** ຂະຫຍາຍສາຂາໃໝ່ ຈໍານວນ 4 ສາຂາ ເລີ່ມແຕ່ ປີ 2024 ຫາ ປີ 2025 ໂດຍຈະເປີດ 2 ສາຂາໃນທ້າຍປີ 2024 ນີ້.

**ເອກະສານປະກອບວາລະທີ 6: ຊີວະປະຫວັດຫຍໍ້ ຂອງສະມາຊິກສະພາບໍລິຫານ.**

**ທ່ານທີ 01**

**ຊື່ - ນາມສະກຸນ** **ທ່ານ ສົມຈິດ ອິນທະມິດ**

**ລາຍລະອຽດເພີ່ມເຕີມ** ກະລຸນາເບິ່ງປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ.

**ທ່ານທີ 2**

**ຊື່ - ນາມສະກຸນ** **ທ່ານ ຣສ.ປອ. ໄຊພອນ ກອງມະນີລາ**

**ລາຍລະອຽດເພີ່ມເຕີມ** ກະລຸນາເບິ່ງປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ.

**ທ່ານທີ 3**

**ຊື່ - ນາມສະກຸນ** **ທ່ານ ວັດດານາ ສຸຄະບັນດິດ**

**ອາຍຸ** 58 ປີ

**ສັນຊາດ** ລາວ

**ວຸດການສຶກສາ** ປະລິນຍາໂທ ບໍລິຫານທຸລະກິດ, ມະຫາວິທະຍາໄລມະຫາສາຣະຄາມ, ປະເທດໄທ, ປີ 2002.

**ປະສົບການເຮັດວຽກ** ຜູ້ອໍານວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 1988-ປະຈຸບັນ

**ຕໍາແໜ່ງງານໃນປະຈຸບັນ** ສະມາຊິກສະພາບໍລິຫານ ແລະ ຜູ້ອໍານວຍການໃຫຍ່ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

**ວັນທີຮັບຕໍາແໜ່ງ** 07 ເມສາ 2023

**ທ່ານທີ 4**

**ຊື່ - ນາມສະກຸນ** **ທ່ານ ສອນສະຫວັນ ແສງອະໄພ**

**ລາຍລະອຽດເພີ່ມເຕີມ** ກະລຸນາເບິ່ງປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ.

**ທ່ານທີ 5**

**ຊື່ - ນາມສະກຸນ** **ທ່ານ ພັນໂນລາ ສຸຄະບັນດິດ**

**ອາຍຸ** 55 ປີ

**ສັນຊາດ** ລາວ

**ວຸດການສຶກສາ** ປະລິນຍາໂທ ບໍລິຫານທຸລະກິດ, ມະຫາວິທະຍາໄລມະຫາສາຣະຄາມ, ປະເທດໄທ, ປີ 2002.

| | |
|---|---|
| **ປະສົບການເຮັດວຽກ** | ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 1988-ປະຈຸບັນ. |
| **ຕຳແໜ່ງງານໃນປະຈຸບັນ** | ສະມາຊິກສະພາບໍລິຫານ ແລະ ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. |
| **ວັນທີຮັບຕຳແໜ່ງ** | 07 ເມສາ 2023 |

**<u>ທ່ານທີ 6</u>**

| | |
|---|---|
| **ຊື່ - ນາມສະກຸນ** | **ທ່ານ ກິດສະດາ ສຸຄະບັນດິດ** |
| **ອາຍຸ** | 52 ປີ |
| **ສັນຊາດ** | ລາວ |
| **ວຸດການສຶກສາ** | ປະລິນຍາໂທ ບໍລິຫານທຸລະກິດ ວິທະຍາໄລຂອນແກ່ນ, ປະເທດໄທ, ປີ 2007. |
| **ປະສົບການເຮັດວຽກ** | ຮອງຜູ້ອຳນວຍການ ຜູ້ອຳນວຍການຝ່າຍປະຕິບັດການ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 2000-ປະຈຸບັນ . |
| **ຕຳແໜ່ງງານໃນປະຈຸບັນ** | ສະມາຊິກສະພາບໍລິຫານ ແລະ ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍປະຕິບັດການ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. |
| **ວັນທີຮັບຕຳແໜ່ງ** | 07 ເມສາ 2023 |

**<u>ທ່ານທີ 7</u>**

| | |
|---|---|
| **ຊື່ - ນາມສະກຸນ** | **ທ່ານ ນາງ ຄຳໄຂ ລໍວັນໄຊ** |
| **ອາຍຸ** | 46 ປີ |
| **ສັນຊາດ** | ລາວ |
| **ວຸດການສຶກສາ** | ປະລິນຍາຕີ ບໍລິຫານທຸລະກິດ, ວິທະຍາໄລ ເສດຖາບໍລິຫານທຸລະກິດ, ປະເທດລາວ, ປີ 2010. |
| **ປະສົບການເຮັດວຽກ** | - ພະນັກງານຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 2000-2005.<br>- ຫົວໜ້າຝ່າຍຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 2005-2014.<br>- ຜູ້ຈັດການຝ່າຍຈັດຊື້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 2015-ປະຈຸບັນ. |
| **ຕຳແໜ່ງງານໃນປະຈຸບັນ** | ສະມາຊິກສະພາບໍລິຫານ ແລະ ຜູ້ຈັດການຝ່າຍຈັດຊື້ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. |
| **ວັນທີຮັບຕຳແໜ່ງ** | 07 ເມສາ 2023 |

<u>ທ່ານທີ 8</u>

| | |
|---|---|
| **ຊື່ - ນາມສະກຸນ** | **ທ່ານ ນາງ ຊຸຕິການ ສີແສງຈັນ** |
| **ອາຍຸ** | 55 ປີ |
| **ສັນຊາດ** | ໄທ |
| **ວຸດການສຶກສາ** | ປະລິນຍາໂທ ບໍລິຫານທຸລະກິດມະຫາບັນດິດ ມະຫາວິທະຍາໄລ ຂອນແກ່ນ, ປະເທດໄທ, ປີ 2001. |
| **ປະສົບການເຮັດວຽກ** | - ກຳມະການບໍລິສັດ Siam Global House PCL, ປີ 2008-2012.<br>- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍບັນຊີແລະການເງິນ Siam Global House PCL, ປີ 2012-ປະຈຸບັນ. |
| **ຕຳແໜ່ງງານໃນປະຈຸບັນ** | - ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.<br>- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍບັນຊີແລະການເງິນ Siam Global House PCL. |
| **ວັນທີຮັບຕຳແໜ່ງ** | 07 ເມສາ 2023 |

<u>ທ່ານທີ 9</u>

| | |
|---|---|
| **ຊື່ - ນາມສະກຸນ** | **ທ່ານ ພິພັບ ວາດສະໜາອາຊາສະກຸນ** |
| **ອາຍຸ** | 54 ປີ |
| **ສັນຊາດ** | ໄທ |
| **ວຸດການສຶກສາ** | ປະລິນຍາຕີ ມະນຸດສາດ ມະຫາວິທະຍາໄລກະເສດສາດ, ປີ 1993. |
| **ປະສົບການເຮັດວຽກ** | - ຜູ້ຊ່ວຍຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House PCL, ປີ 2014-2017.<br>- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House<br>PCL, ປີ 2017-ປະຈຸບັນ.<br>- ຄະນະກາມະການ ບໍລິສັດ ພີທີ ຄາທູກາດ້າ ເດໂປ້ ບັນກູນັນ ທີບີເຄ (ປະເທດອິນໂດເນເຊຍ) ປີ 2022-ປະຈຸບັນ. |
| **ຕຳແໜ່ງງານໃນປະຈຸບັນ** | - ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.<br>- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House PCL. |
| **ວັນທີຮັບຕຳແໜ່ງ** | 07 ເມສາ 2023 |

# ເອກະສານປະກອບວາລະທີ 8: ຮ່າງປັບປຸງກົດລະບຽບຂອງບໍລິສັດ

# ຮ່າງປັບປຸງກົດລະບຽບຂອງບໍລິສັດ

| ຂໍ້ຄົງຄ້າງພົບຂອງການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ (CG) ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປະຈໍາປີ 2023 | ເນື້ອໃນຮ່າງປັບປຸງກົດລະບຽບຂອງບໍລິສັດ |
|---|---|
| 1. ຜູ້ຖືຮຸ້ນໄດ້ຮັບສິດລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ 1 ຮຸ້ນ ຕໍ່ 1 ສຽງ ຫຼືບໍ່? | **ມາດຕາ 23 ການລົງຄະແນນສຽງ ແລະ ມະຕິຂອງກອງປະຊຸມຜູ້ຖືຮຸ້ນ (ໃໝ່)**<br>ການລົງຄະແນນສຽງ ແມ່ນການອອກສຽງໂດຍຜູ້ຖືຮຸ້ນ ຫຼື ຜູ້ຕາງຫນ້າທີ່ໄດ້ຮັບມອບຫມາຍ ເພື່ອຮັບຮອງເອົາບັນຫາໃດຫນຶ່ງຢູ່ໃນກອງປະຊຸມຜູ້ຖືຮຸ້ນ ຊຶ່ງກໍານົດເອົາຫນຶ່ງຮຸ້ນເທົ່າກັບຫນຶ່ງສຽງ. |
| 2. ບໍລິສັດ ຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ຕາມລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ພາຍໃນ 30 ວັນ ນັບແຕ່ມື້ມີມະຕິຈ່າຍເງິນປັນຜົນ ຫຼື ບໍ່? | **ມາດຕາ  66 ເງິນປັນຜົນ (ປັບປຸງ)**<br>2. ຜູ້ຖືຮຸ້ນຈະໄດ້ຮັບເງິນປັນຜົນຕາມອັດຕາສ່ວນການຖືຮຸ້ນຂອງຕົນ ພາຍໃນກໍານົດເວລາສາມສິບ (30) ວັນ ນັບຈາກວັນທີ ທີ່ກອງປະຊຸມຜູ້ຖືຮຸ້ນໄດ້ຮັບຮອງເອົາການແບ່ງປັນເງິນປັນຜົນ ແລະ ຕ້ອງເປັນຜູ້ທີ່ມີລາຍຊື່ຢູ່ໃນບັນຊີລາຍຊື່ຜູ້ຖືຮຸ້ນ ທີ່ມີສິດໄດ້ຮັບເງິນປັນຜົນ; |
| 3. ຜູ້ຖືຮຸ້ນທີ່ຖືຮຸ້ນລວມກັນແຕ່ 5% ຂຶ້ນໄປມີສິດໃນການສະເໜີລາຍຊື່ຜູ້ສະໝັກ ເພື່ອປະກອບເປັນສະມາຊິກສະພາບໍລິຫານຂອງບໍລິສັດ ຫຼື ບໍ່? | **ມາດຕາ 27 ການແຕ່ງຕັ້ງ ແລະ ທະບຽນຂໍ້ມູນຂອງສະມາຊິກສະພາບໍລິຫານ (ປັບປຸງ)**<br>ສະມາຊິກສະພາບໍລິຫານຖືກແຕ່ງຕັ້ງ ຫຼື ປົດຕໍາແຫນ່ງໂດຍກອງປະຊຸມຜູ້ຖືຮຸ້ນ.<br>ຜູ້ຖືຮຸ້ນ ຫຼື ກຸ່ມຜູ້ຖືຮຸ້ນທີ່ຖືຮຸ້ນລວມກັນທັງຫມົດແຕ່ ຫ້າສ່ວນຮ້ອຍຂຶ້ນໄປຂອງຈໍານວນຮຸ້ນທັງຫມົດ ຂອງ ສ.ວ.ນ ມີສິດສະເຫນີລາຍຊື່ຜູ້ທີ່ຈະລົງສະຫມັກເປັນສະມາຊິກສະພາບໍລິຫານຕໍ່ຄະນະກໍາມະການຄັດເລືອກ ເພື່ອພິຈາລະນາສະເຫນີຕໍ່ສະພາບໍລິຫານກ່ອນນໍາເຂົ້າກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ. ການສະເຫນີລາຍຊື່ຜູ້ສະຫມັກດັ່ງກ່າວ ໃຫ້ປະຕິບັດຕາມອັດຕາສ່ວນການຖືຮຸ້ນດັ່ງນີ້:<br>- ຜູ້ຖືຮຸ້ນແຕ່ຫ້າ (5) ຫາ ສິບ (10) ສ່ວນຮ້ອຍ; ສາມາດສະເຫນີໄດ້ 1 ທ່ານ;<br>- ຜູ້ຖືຮຸ້ນຫຼາຍກວ່າສິບ (>10) ຫາ ຊາວ (20) ສ່ວນຮ້ອຍ: ສາມາດສະເຫນີໄດ້ 2 ທ່ານ;<br>- ຜູ້ຖືຮຸ້ນຫຼາຍກວ່າຊາວ (>20) ຫາ ສາມສິບ (30) ສ່ວນຮ້ອຍ: ສາມາດສະເຫນີໄດ້ 3 ທ່ານ;<br>- ຜູ້ຖືຮຸ້ນຫຼາຍກວ່າສາມສິບ (>30) ຫາ ຫ້າສິບ (50) ສ່ວນຮ້ອຍ: ສາມາດສະເຫນີໄດ້ 4 ທ່ານ; |

| | |
|---|---|
| | - ຜູ້ຖືຮຸ້ນຫຼາຍກ່ວາຫ້າສິບ (>50) ຫາ ເຈັດສິບ (70) ສ່ວນຮ້ອຍ: ສາມາດສະເຫນີໄດ້ 5 ທ່ານ;<br>- ຜູ້ຖືຮຸ້ນຫຼາຍກ່ວາເຈັດສິບ (>70) ສ່ວນຮ້ອຍ: ສາມາດສະເຫນີໄດ້ 7 ທ່ານ. |
| 4. ບໍລິສັດໄດ້ແຈ້ງໃຫ້ຜູ້ຖືຮຸ້ນຊາບກ່ຽວກັບຂັ້ນຕອນ, ວິທີການລົງຄະແນນສຽງ ແລະ ແຈ້ງຜົນການລົງຄະແນນສຽງແຕ່ລະວາລະຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ບໍ່? | **ມາດຕາ 20 ການເຂົ້າຮ່ວມກອງປະຊຸມຂອງຜູ້ຖືຮຸ້ນ ແລະ ການແຕ່ງຕັ້ງຜູ້ຕາງຫນ້າ (ໃໝ່)**<br>ຜູ້ຖືຮຸ້ນທີ່ມີສິດເຂົ້າຮ່ວມກອງປະຊຸມຕາມກົດຫມາຍ ຈະຕ້ອງເຂົ້າຮ່ວມດ້ວຍຕົນເອງ ຫຼື ແຕ່ງຕັ້ງໃຫ້ຜູ້ ຕາງຫນ້າຂອງຕົນເຂົ້າຮ່ວມແທນ. ຜູ້ເຂົ້າຮ່ວມກອງປະຊຸມ ຈະຕ້ອງໄດ້ລົງທະບຽນ ເພື່ອສະແດງຕົນ ແລະ ສະແດງເອກະສານຢັ້ງຢືນການຖືຮຸ້ນ (ກໍລະນີເປັນຜູ້ຖືຮຸ້ນ) ຫຼື ໃບມອບສິດ (ກໍລະນີເປັນຜູ້ຕາງຫນ້າ) ຕໍ່ປະທານ ກອງປະຊຸມ ຫຼື ຜູ້ອໍານວຍການກ່ອນດໍາເນີນກອງປະຊຸມ.<br>ການແຕ່ງຕັ້ງໃຫ້ຜູ້ຕາງຫນ້າເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນໃນແຕ່ລະຄັ້ງ ຈະຕ້ອງເຮັດໃບມອບສິດຢ່າງ ເປັນລາຍລັກອັກສອນ ໂດຍມີເນື້ອໃນສໍາຄັນດັ່ງນີ້:<br>1. ຊື່ຜູ້ຖືຮຸ້ນ ແລະ ຊື່ຜູ້ຕາງຫນ້າທີ່ໄດ້ຮັບການມອບສິດ;<br>2. ຈໍານວນຮຸ້ນຂອງຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງຫນ້າ;<br>3. ກໍານົດເວລາ, ສະຖານທີ່ຂອງກອງປະຊຸມ ແລະ ຂອບເຂດຂອງການມອບຫມາຍ. ໃນກໍລະນີທີ່ ຕ້ອງການໃຫ້ລົງຄະແນນສຽງແທນ ກໍ່ຕ້ອງໄດ້ລະບຸລະອຽດກ່ຽວກັບການມອບສິດດັ່ງກ່າວ.<br><br>ຜູ້ຕາງຫນ້າມີຄະແນນສຽງເທົ່າກັບສຽງຂອງຜູ້ມອບຫມາຍ ເວັ້ນເສຍແຕ່ໄດ້ກໍານົດຢ່າງອື່ນໄວ້ຢູ່ໃນໃບມອບສິດ. ໃນກໍລະນີຜູ້ຖືຮຸ້ນເສຍຊີວິດ ຜູ້ສືບທອດສິດຕາມກົດຫມາຍສາມາດເຂົ້າຮ່ວມກອງປະຊຸມແທນ. |
| 5. ການອອກຈໍາໜ່າຍຮຸ້ນໃໝ່ ຕ້ອງຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ຫຼືບໍ່? | **ມາດຕາ 11 ຮຸ້ນ (ປັບປຸງ)**<br>ສ.ວ.ນ ສາມາດອອກຮຸ້ນບູລິມະສິດ ແລະ ຮຸ້ນປະເພດອື່ນໆ ພາຍຫຼັງທີ່ໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນໂດຍສອດຄ່ອງຕາມລະບຽບກົດຫມາຍທີ່ກໍານົດໄວ້. |

| | |
|---|---|
| **6.** ຜູ້ຖືຮຸ້ນ ຈະໄດ້ຮັບສິດໃນການຈອງຊື້ຮຸ້ນອອກໃໝ່ ໃນອັດຕາສ່ວນ ແລະ ວິທີແບ່ງປັນຮຸ້ນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ ກ່ອນສະເໜີຂາຍໃຫ້ແກ່ພາກສ່ວນພາຍນອກ ຫຼື ບໍ່? | **ມາດຕາ 15 ສິດຂອງຜູ້ຖືຮຸ້ນ (ໃໝ່)**<br>15.1 ຜູ້ຖືຮຸ້ນສາມັນມີສິດດັ່ງນີ້:<br>- ໄດ້ຮັບບຸລິມະສິດໃນການຈອງຊື້ຮຸ້ນໃຫມ່ທີ່ຈະສະເຫນີຂາຍກ່ອນບຸກຄົນພາຍນອກ ຕາມອັດຕາສ່ວນຈໍານວນຮຸ້ນສາມັນທີ່ຕົນເອງຖືຮຸ້ນໃນ ສ.ວ.ນ ແລະ ຕາມມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ; |
| **7.** ການແຕ່ງຕັ້ງ ຫຼື ຍົກເລີກສັນຍາບໍລິສັດກວດສອບ ແລະ ຄ່າບໍລິການກວດສອບໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ ຫຼື ບໍ່? | **ມາດຕາ 60 ການກວດສອບບັນຊີ (ປັບປຸງ)**<br>3. ໃນແຕ່ລະປີ ກອງປະຊຸມຜູ້ຖືຮຸ້ນຈະອະນຸມັດເລືອກເອົາບໍລິສັດກວດສອບບັນຊີ ຕາມການສະເຫນີຂອງ ສະພາບໍລິຫານ; |
| **8.** ຜູ້ຖືຮຸ້ນ ທີ່ຖືຮຸ້ນລວມກັນແຕ່ 5% ຂຶ້ນໄປຂອງຈໍານວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດ ມີສິດສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ຫຼືບໍ່? | **ມາດຕາ 22 ເງື່ອນໄຂສໍາລັບການດໍາເນີນກອງປະຊຸມຜູ້ຖືຮຸ້ນ (ໃໝ່)**<br>ຜູ້ຖືຮຸ້ນ ຫຼື ກຸ່ມຜູ້ຖືຮຸ້ນທີ່ຖືຮຸ້ນຫຼາຍກວ່າຫ້າສ່ວນຮ້ອຍ (5%) ຂອງຈໍານວນຮຸ້ນທັງຫມົດ ສາມາດສະເຫນີຂໍເພີ່ມວາລະເພື່ອພິຈາລະນາໃນກອງປະຊຸມຜູ້ຖືຮຸ້ນໄດ້. |
| **9.** ຜູ້ກວດສອບພາຍນອກ ໄດ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເພື່ອຕອບຄໍາຖາມຂອງຜູ້ຖືຮຸ້ນ ຫຼືບໍ່? | **ມາດຕາ 60 ການກວດສອບບັນຊີ (ປັບປຸງ)**<br>6. ຜູ້ກວດສອບບັນຊີພາຍນອກທີ່ກວດສອບ ສ.ວ.ນ ມີສິດເຂົ້າຮ່ວມທຸກກອງປະຊຸມຜູ້ຖືຮຸ້ນ ແລະ ໄດ້ຮັບແຈ້ງການ ແລະ ຂໍ້ມູນຂ່າວສານອື່ນໆທີ່ຕິດພັນກັບການກວດສອບບັນຊີ. |
| **10.** ຜູ້ຖືຮຸ້ນຂອງບໍລິສັດ ທີ່ຖືຮຸ້ນລວມກັນແຕ່ 10% ຂຶ້ນໄປ ຂອງຈໍານວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດ ສາມາດສະເໜີຕໍ່ສະພາບໍລິຫານເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄດ້ ຫຼື ບໍ່? | **ມາດຕາ 19 ກອງປະຊຸມຜູ້ຖືຮຸ້ນ (ປັບປຸງ)**<br>**19.2 ກອງປະຊຸມວິສາມັນຂອງຜູ້ຖືຮຸ້ນ**<br>ກອງປະຊຸມວິສາມັນຂອງຜູ້ຖືຮຸ້ນອາດຈະຖືກຈັດຂຶ້ນຖ້າຫາກເຫັນວ່າມີຄວາມຈໍາເປັນໂດຍຜ່ານ ການຕົກລົງເຫັນດີຂອງສະພາບໍລິຫານ, ຜູ້ຖືຮຸ້ນ ຫຼື ກຸ່ມຜູ້ຖືຮຸ້ນທີ່ຖືຮຸ້ນຫຼາຍກວ່າສິບສ່ວນຮ້ອຍ (10%) ຂອງຈໍານວນຮຸ້ນສາມັນທັງຫມົດເປັນໄລຍະຫົກເດືອນ (6 ເດືອນ) ຕິດຕໍ່ກັນ ຫຼື ຫຼາຍກວ່ານັ້ນມີສິດສະເຫນີ ເປີດກອງປະຊຸມວິສາມັນຂອງຜູ້ຖືຮຸ້ນໃນກໍລະນີ ດັ່ງນີ້: |

| | |
|---|---|
| | 1. ໃບລາຍງານຖານະການເງິນສະແດງເຖິງຄວາມບໍ່ຫມັ້ນຄົງຂອງ ສ.ວ.ນ ເຊັ່ນ: ອັດຕາສ່ວນຄວາມພຽງພໍຂອງທຶນຕໍ່ຊັບສິນມີທ່າອ່ຽງຫຼຸດລົງ ຫຼື ຫຼຸດລົງຕໍ່າກວ່າເກນກຳນົດທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ກຳນົດໄວ້;<br>2. ເມື່ອຈຳນວນສະມາຊິກສະພາບໍລິຫານ ມີຫນ້ອຍກວ່າຈຳນວນທີ່ໄດ້ກຳນົດໄວ້ໃນກົດລະບຽບ ສະບັບນີ້ ຫຼື ຫນ້ອຍກວ່າຈຳນວນສະມາຊິກທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ;<br>3. ໃນກໍລະນີມີເຫດຜົນທີ່ເຮັດໃຫ້ເຊື່ອໄດ້ວ່າ ຜູ້ບໍລິຫານຂອງ ສ.ວ.ນ ມີການລະເມີດຢ່າງຮ້າຍແຮງ ຕໍ່ກົດລະບຽບສະບັບນີ້ ຫຼື ລະເມີດຕໍ່ລະບຽບກົດຫມາຍຂອງ ສປປ ລາວ ຊຶ່ງພາໃຫ້ເກີດມີຄວາມເສຍຫາຍແກ່ ສ.ວ.ນ ແລະ ຜູ້ຖືຮຸ້ນ;<br>4. ເປີດກອງປະຊຸມຜູ້ຖືຮຸ້ນຕາມຄຳສັ່ງຂອງສານ;<br>5. ການດັດແກ້ ແລະ ການເພີ່ມເຕີມເນື້ອໃນໃຫ້ແກ່ກົດລະບຽບສະບັບນີ້;<br>6. ການເພີ່ມ ຫຼື ຫຼຸດທຶນຈົດທະບຽນ;<br>7. ການຈັດຕັ້ງຄືນໃຫມ່ ແລະ ການຍຸບເລີກ (ການຊຳລະສະສາງ) ກ່ຽວກັບ ສ.ວ.ນ ແລະ ການແຕ່ງຕັ້ງຜູ້ຊຳລະສະສາງ;<br>8. ກໍລະນີອື່ນໆ ທີ່ໄດ້ກຳນົດໃນກົດລະບຽບສະບັບນີ້ ກໍ່ຄືລະບຽບກົດຫມາຍຂອງ ສປປ ລາວ. |

# ແຜນທີ່ສະຖານທີ່ຈັດປະຊຸມ

Lao Securities Exchange(LSX) Building , 4th floor Phonthan Neua Village, T4 Road, Saysettha District,
Vientiane Capital City. Lao P.D.R
P.O Box: 3373

Tel : +856 - 21 - 454361-4
Fax : + 856 - 21 - 454360

